ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

10-16 ກຸມພາ 2023
ປີທີ 12
ສະບັບທີ 909
ລາຍສັປະດາ

## ປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງປະທານຄະນະມິດຕະພາບລັດຖະສະພາ ຣັດເຊຍ-ລາວ

(ສພຊ) ຕອບສະໜອງຕາມການເຊື້ອເຊີນ ຂອງທ່ານ ພົນໂທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ຣັດເຊຍ ຂອງສະພາແຫ່ງຊາດ ແຫ່ງ ສປປ ລາວ ຄະນະຜູ້ແທນສະພາສູງແຫ່ງສະຫະພັນລັດເຊຍ ນຳໂດຍທ່ານ ປາເວວ ຕາຣາການົບ (Pavel Tarakanov) ປະທານຄະນະມິດຕະພາບລັດຖະສະພາ ຣັດເຊຍ-ລາວ, ສະມາຊິກກຳມາທິການງົບປະມານ ແລະ ການເງິນຕະຫຼາດ, ປະທານຄະນະມິດຕະພາບລັດຖະສະພາຣັດເຊຍ-ລາວ ຂອງສະພາສູງ ແຫ່ງສະຫະພັນຣັດເຊຍ ພ້ອມດ້ວຍຄະນະ ໄດ້ເດີນທາງມາຢ້ຽມ



ຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ໃນລະຫວ່າງ ວັນທີ 6-10 ກຸມພາ 2023.

ຈຸດປະສົງຂອງການຢ້ຽມຢາມ ແລະ ເຮັດວຽກໃນຄັ້ງນີ້ ກໍເພື່ອປະກອບສ່ວນໃນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ມີມູນເຊື້ອອັນດີງາມ ແລະ ການເປັນຄູ່ຮ່ວມຍຸດທະສາດ ລະຫວ່າງ ສປປລາວ ແລະ ສະຫະພັນຣັດເຊຍ ກໍຄືການພົວພັນຮ່ວມມື ລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາສູງຣັດເຊຍ, ທັງເປັນການຊຸກຍູ້ການຮ່ວມມື ລະຫວ່າງ ສອງລັດຖະບານ ລາວ-ລັດເຊຍ ເປັນຕົ້ນ ການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາຂໍ້ຕົກລົງ, ບັນດາໂຄງການລົງທຶນ ແລະ ຮ່ວມມືຕ່າງໆ, ການຄ້າສອງຝ່າຍ, ການທ່ອງທ່ຽວ, ການສຶກສາແລະວຽກງານອື່ນໆ.

ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກໃນຄັ້ງນີ້, ຄະນະຜູ້ແທນດັ່ງກ່າວໄດ້ເຂົ້າຢ້ຽມຂໍ່ານັບທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວ ແລະ ເຂົ້າຢ້ຽມ

ອ່ານຕໍ່ໜ້າ 2

## ທ່ານ ປອ. ໄຊສົມພອນ ພົມວິຫານ ເຄື່ອນໄຫວຢ້ຽມຢາມ ແລະ ຊີ້ນຳ ຢູ່ເມືອງເຟືອງ



ອ່ານຕໍ່ໜ້າ 4

## ພິທີມອບຫຼຽນກາລະນຶກ ວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຄົບຮອບ 65 ປີ



ອ່ານໜ້າ 8

## ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ໄຊຍະບູລີ ຊຸດທີ II

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າຂອງວັນທີ 8 ກຸມພາ 2023, ທີ່ສະໂມສອນໃຫຍ່ໂຮງຮຽນການເມືອງການປົກຄອງແຂວງໄຊຍະບູລີ, ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ

ອ່ານຕໍ່ໜ້າ 3



## ກອງປະຊຸມ ປຶກສາຫາລືຂອງກຳມາທິການ ເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ

(ສພຊ) ວັນທີ 2 ກຸມພາ 2023, ທີ່ສະພາແຫ່ງຊາດ ນະຄອນຫລວງວຽງຈັນ ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໄດ້ຈັດກອງປະຊຸມ ປຶກສາຫາລືຂອງຄະນະທີ່ປຶກສາບໍ່ປະຈຳການຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມຂຶ້ນ; ພາຍໃຕ້ການເປັນປະທານຂອງທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ກຳມະການຄະນະປະຈຳ, ປະທານກຳມາທິການເສດຖະກິດເຕັກ



ໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ເຂົ້າຮ່ວມມີ ບັນດາທ່ານຄະນະທີ່ປຶກສາ ພ້ອມດ້ວຍພະນັກງານ-ລັດຖະກອນ ເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມ ກໍເພື່ອເປັນການຜັນຂະ

ອ່ານຕໍ່ໜ້າ 3



### ກອງປະຊຸມຮ່ວມຂອງ ຄະນະເລຂາທິການ...

ອ່ານຕໍ່ໜ້າ 5



### ກອງປະຊຸມປະຈຳປີ 2022 ຂອງຄະນະ ສສຊ ...

ອ່ານຕໍ່ໜ້າ 6



### ກອງປະຊຸມຄົບຄະນະ...

ອ່ານຕໍ່ໜ້າ 7




## ປະທານ...

(ຕໍ່ຈາກໜ້າ 1)

ຂໍ່ານັບ ທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ; ນອກຈາກນັ້ນ, ຄະນະ ຍັງໄດ້ພົບປະເຮັດວຽກກັບທ່ານ ຄໍາເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ທ່ານນາງ ສວນສະຫວັນ ວິຍະເກດ ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ທ່ານ ງາມປະສົງ ເມືອງມະນີ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ, ທ່ານ ອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫຼວງວຽງຈັນ, ປະທານສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງ ສປປລາວ ແລະ ຢ້ຽມຢາມສະຖານທີ່ວັດທະນະທໍາ ແລະ ທ່ອງທ່ຽວ ຈໍານວນໜຶ່ງ ຢູ່ນະຄອນຫຼວງວຽງຈັນ ແລະ ຈະເດີນທາງໄປເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງຫຼວງພະບາງ ເພື່ອສໍາຜັດກັບວັດທະນະທໍາ, ຮີດຄອງປະເພນີ, ທໍາມະຊາດທີ່ສວຍງາມ ແລະ ອຸດົມສົມບູນ ຂອງເມືອງມໍລະດົກໂລກ ຕື່ມອີກ.

ໃນມື້ດຽວກັນ ຄະນະມິດຕະພາບລັດຖະສະພາ ລາວ-ຣັດເຊຍ ໄດ້ມີການພົບປະສອງຝ່າຍຮ່ວມກັນ ທີ່ຫໍສະພາແຫ່ງຊາດ ເພື່ອຕີລາຄາຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ພ້ອມກັນປຶກສາຫາລືທິດທາງແຜນການພົວພັນຮ່ວມມືໃນຕໍ່ໜ້າ ລະຫວ່າງສອງຄະນະມິດຕະພາບລັດຖະສະພາລາວ-ຣັດເຊຍ-ລາວໃນນາມທີ່ເປັນກົນໄກໜຶ່ງ ຂອງສອງອົງການນິຕິບັນຍັດ ຂອງສອງຝ່າຍແນໃສ່ຊຸກຍູ້ ແລະ ສົ່ງເສີມການພົວພັນ ແລະ ຮ່ວມມືລະຫວ່າງສອງອົງການນິຕິບັນຍັດ, ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືທີ່ດີ ລະຫວ່າງ ສປປລາວ ແລະ ສ. ຣັດເຊຍ ແລະ ສອງອົງການນິຕິບັນຍັດ ກໍຄືຄະນະມິດຕະພາບລັດຖະສະພາລາວ-ຣັດເຊຍ, ສອງຝ່າຍຈະໄດ້ພ້ອມກັນຊຸກຍູ້ໃຫ້ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນລະດັບຕ່າງໆນໍາກັນໂດຍສະເພາະ ລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາສູງ ແຫ່ງສະຫະພັນຣັດເຊຍ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ພິເສດ, ສອງຝ່າຍຈະຊຸກຍູ້ສອງລັດຖະບານ ເສີມຂະຫຍາຍການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ການທ່ອງທ່ຽວໃຫ້ເປັນຮູບປະທໍາຫຼາຍຂຶ້ນ, ຜ່ານມານີ້ພວກເຮົາໄດ້ມີການເປີດສາຍການບິນໂດຍກົງລະຫວ່າງ ລາວ-ຣັດເຊຍ ເຊິ່ງເປັນອີກເງື່ອນໄຂໜຶ່ງທີ່ດີໃນການປະກອບສ່ວນເສີມຂະຫຍາຍການຄ້າຂາຍຮ່ວມກັນ, ການລົງທຶນ, ການທ່ອງທ່ຽວ ແລະ ອື່ນໆ ໃນອະນາຄົດຈະນໍາເອົາຜົນປະໂຫຍດມາໃຫ້ປະຊາຊົນສອງຊາດ.

(ນາງ ໄຊໂສພາພອນ ມິ່ງມຸງຄຸນ)

# ຍົກສູງຂີດຄວາມສາມາດການເປັນເສນາທິການ ດ້ານວຽກງານສະມາຊິກສະພາແຫ່ງຊາດ

(ສພຊ) ເພື່ອປະຕິບັດຕາມແຜນການສ້າງຄວາມເຂັ້ມແຂງ ໃຫ້ພະນັກງານຂັ້ນວິຊາການຂອງກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ຊຸດທີ IX ແລະ ພະນັກງານຂະແໜງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຄະນະກໍາມາທິການຍຸຕິທໍາ ແລະ ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ປະຈໍາປີ 2022, ໃນວັນທີ 26 ມັງກອນ 2022 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີບັນດາທ່ານຕາງໜ້າຈາກຄະນະກໍາມະການຂອງກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ແຂກຖືກເຊີນ, ທ່ານນັກວິທະຍາກອນມາຈາກກໍາມາທິການຍຸຕິທໍາ, ກົດໝາຍ ແລະ ກົມເລຂານຸການ ຄະນະເລຂາທິການສະພາແຫ່ງຊາດ ເຂົ້າຮ່ວມ.



ກອງປະຊຸມສ້າງຄວາມເຂັ້ມແຂງໃຫ້ພະນັກງານຂັ້ນວິຊາການຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນຄັ້ງນີ້ ບັນດານັກສໍາມະນາກອນໄດ້ຮັບຟັງພາລະບົດບາດ ວ່າດ້ວຍການຮັບ ແລະ ການພິຈາລະນາຄໍາຮ້ອງຂໍຄວາມເປັນທໍາຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈໍາສະພາແຫ່ງຊາດ; ການຮ່າງ ແລະ ການຈໍລະຈອນເອກະສານທາງລັດຖະການ ຂອງສະພາແຫ່ງຊາດ; ຍົກສູງຄວາມຮູ້ ແລະ ວິທີການສ້າງ ແລະ ປັບປຸງກົດໝາຍ, ນິຕິກໍາໃຕ້ກົດໝາຍ; ພາລະບົດບາດ ການຕິດຕາມກວດກາຂອງກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕໍ່ກໍາລັງປະກອບອາວຸດ; ພາລະບົດບາດ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ແລະ ຂໍ້ຕົກລົງຮ່ວມ ຄະນະປະສານງານລະຫວ່າງກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າ.

ທ່ານ ພົຕ. ປອ. ວົງສັກ ພັນທະວົງ ໄດ້ຮຽກຮ້ອງມາຍັງນັກວິທະຍາກອນ ຈົ່ງເອົາໃຈໃສ່ຢ່າງປະດິດ ເພື່ອຖ່າຍທອດຄວາມຮູ້ໃຫ້ນັກສໍາມະນາກອນ ກໍຄືພະນັກງານຂັ້ນວິຊາການຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ນັບທັງຢູ່ຂັ້ນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທີ່ມາຝຶກອົບຮົມຄັ້ງນີ້ ກໍາໄດ້ບົດຮຽນຕ່າງໆ ແລະ ຮຽກຮ້ອງມາຍັງນັກສໍາມະນາກອນ ຈົ່ງເອົາໃຈໃສ່ຟັງການບັນລະຍາຍເນື້ອໃນເອກະສານໃຫ້ດີ ອັນໃດບໍ່ທັນເຂົ້າໃຈຈົ່ງກ້າຫານຖາມຄືນ ແລະ ປະກອບຄໍາເຫັນດ້ວຍຄວາມສ້າງສັນ, ຫວັງວ່າບັນດາສະຫາຍຈະເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ ເຂົ້າໃນການ ຄົ້ນຄວ້າ, ປະກອບຄໍາເຫັນຕໍ່ທຸກບັນຫາຢ່າງຖີ່ຖ້ວນ, ພາວະວິໄສ ແລະ ເລິກເຊິ່ງ ເພື່ອເຮັດໃຫ້ກອງປະຊຸມສ້າງຄວາມເຂັ້ມແຂງ ໃນຄັ້ງນີ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

# ປະທານ ກສຕສ ເຄື່ອນໄຫວຕິດຕາມກວດກາຢູ່ແຂວງໄຊຍະບູລີ



(ສພຊ) ວັນທີ 5-6 ກຸມພາ 2023 ທ່ານ ຣສ. ປອ. ລິນຄໍາ ດວງສະຫວັນ ປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຮັດວຽກຢູ່ແຂວງໄຊຍະບູລີ ເພື່ອຮັບຟັງຄວາມຄິດຄວາມເຫັນຂອງປະຊາຊົນ, ອໍານາດການປົກຄອງທ້ອງຖິ່ນ, ສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງກ່ຽວກັບການພັດທະນາໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄໍາ ຂອງບໍລິສັດ ມໍລະກົດ ເປນຊຽນ ບໍ່ແຮ່ ຈໍາກັດ, ພ້ອມທັງເກັບກໍາຂໍ້ມູນ ແລະ ລົງເບິ່ງພື້ນທີ່ຕົວຈິງ ກ່ຽວກັບທີ່ດິນປ່າໄມ້ທໍາມະຊາດທີ່ລັດຖະບານສະເໜີຂໍຫັນປ່ຽນໄປເປັນທີ່ດິນອຸດສາຫະກໍາ ລັກສະນະຊົ່ວຄາວ ແລະ ລັກສະນະຖາວອນທີ່ໄດ້ສັງລວມລາຍງານຕໍ່ກອງປະຊຸມຄະນະປະຈໍາສະພາແຫ່ງຊາດພິຈາລະນາ ໃນເດືອນມັງກອນຜ່ານມາ.

ໂອກາດລົງເຄື່ອນໄຫວເຮັດວຽກຄັ້ງນີ້, ຄະນະ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ພົງສະຫວັນ ສິດທະວົງ ເລຂາພັກແຂວງ, ເຈົ້າແຂວງໆໄຊຍະບູລີ ເພື່ອລາຍງານຈຸດປະສົງໃນການເຄື່ອນໄຫວເຮັດວຽກຢູ່ແຂວງໄຊຍະບູລີ, ໂອກາດດັ່ງກ່າວ ທ່ານເຈົ້າແຂວງໆໄຊຍະບູລີ ກໍໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງອວຍພອນໃຫ້ທ່ານປະທານກໍາມາທິການ ພ້ອມດ້ວຍຄະນະ ເຄື່ອນໄຫວເຮັດວຽກຢູ່ແຂວງໄຊຍະບູລີ ໃຫ້ສໍາເລັດຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້.

ຈາກນັ້ນ, ທ່ານ ຣສ. ປອ. ລິນຄໍາ ດວງສະຫວັນ ໄດ້ເຂົ້າຮ່ວມເປັນປະທານກອງປະຊຸມຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ, ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ ແລະ ໂຄງການລົງທຶນດ້ານພະລັງງານ ແລະ ບໍ່ແຮ່ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ເຂົ້າຮ່ວມມີທ່ານ ບຸນຕາ ເທບພະວົງ ຮອງປະທານກໍາມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫາງຊາດ, ທ່ານ ບຸນລ້ອມ ຊົມສີຫາປັນຍາ ຮອງປະທານສະພາປະຊາຊົນແຂວງ (ສພຂ), ມີຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ສພຂ, ພະແນກການທີ່ກ່ຽວຂ້ອງ ພ້ອມດ້ວຍແຂກຖືກເຊີນ.

ກອງປະຊຸມ ໄດ້ຮັບຟັງການລາຍງານກ່ຽວກັບສະພາບການລົງທຶນດ້ານພະລັງງານ ແລະ ບໍ່ແຮ່ແຂວງ; ການຈັດຕັ້ງປະຕິບັດວາລະແຫ່ງຊາດ ທີ່ຕິດພັນກັບວຽກງານຂົງເຂດພະລັງງານ ແລະ ບໍ່ແຮ່; ການຟື້ນຟູປ່າ ແລະ ປູກປ່າທົດແທນຄືນພື້ນທີ່ປ່າໄມ້ທໍາມະຊາດ ທີ່ຖືກໂຄງການພັດທະນາໄຟຟ້າ ແລະ ຂຸດຄົ້ນບໍ່ແຮ່; ການຊົດເຊີຍຜົນກະທົບໃຫ້ປະຊາຊົນທີ່ຖືກຜົນກະທົບ ຈາກໂຄງການພັດທະນາພະລັງງານໄຟຟ້າ ແລະ ບໍ່ແຮ່, ຕິດພັນກັບບັນຫາຜົນກະທົບຈາກການພັດທະນາໂຄງການດັ່ງກ່າວ. ພ້ອມນັ້ນ, ບັນດາຜູ້ເຂົ້າຮ່ວມກໍໄດ້ປະກອບຄໍາຄິດຄໍາເຫັນຕໍ່ກອງປະຊຸມຢ່າງກົງໄປກົງມາ ເພື່ອຫາທິດທາງໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ຂອງແຂວງ ກໍຄືຂອງຊາດໃຫ້ສໍາເລັດຕາມຄາດໝາຍທີ່ວາງໄວ້.

ພ້ອມນັ້ນ, ທ່ານປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ພ້ອມຄະນະຍັງໄດ້ ລົງພື້ນທີ່ຕົວຈິງໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄໍາ ຢູ່ເຂດບ້ານໂພນສະຫວັນ ເມືອງປາກລາຍ ພ້ອມຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການລິເລີ່ມຈັດຕັ້ງປະຕິບັດພັດທະນາໂຄງການ. ຈາກນັ້ນ, ໄດ້ມີຄໍາເຫັນໂອ້ລົມ ເຊິ່ງທ່ານມີຄວາມເປັນຫ່ວງເປັນໄຍຕໍ່ລະບົບນິເວດທໍາມະຊາດ ແລະ ສະເໜີໃຫ້ໂຄງການເອົາໃຈໃສ່ຕໍ່ບັນຫາດັ່ງກ່າວ, ໃຫ້ສ້າງວຽກເຮັດງານທໍາໃຫ້ປະຊາຊົນໃນຊຸມຊົນ, ສ້າງຖະໜົນຫົນທາງ ເພື່ອໃຫ້ປະຊາຊົນໄປມາສະດວກສະບາຍສ້າງເງື່ອນໄຂອໍານວຍຄວາມສະດວກການຂົນສົ່ງການຜະລິດເປັນສິນຄ້າ.

(ກົງທະນູຄໍາ ພິພັດເສລີ)

# ມອບ-ຮັບເຄື່ອງຊ່ວຍເຫຼືອເພື່ອນໍາໄປມອບຕໍ່ໃຫ້ເຂດຫ່າງໄກສອກຫຼີກ

(ສພຊ) ວັນທີ 6 ກຸມພາ 2023 ທີ່ສະພາແຫ່ງຊາດ, ໄດ້ມີພິທີມອບ-ຮັບ ເຄື່ອງຊ່ວຍເຫຼືອ ເຊິ່ງມອບໂດຍທ່ານ ນາງ ຈັນທະວິສຸກ ນິຣັດໄຊ ປະທານໂບດກາໂຕລິກ, ຮັບໂດຍທ່ານ ແກ້ວຈະເລີນ ເຊ່ຍຢົ້ງຢ່າງ ຮອງປະທານກໍາມາທິການບັນດາເຜົ່າ; ເຄື່ອງຊ່ວຍເຫຼືອດັ່ງກ່າວປະກອບມີ: ເສື້ອກັນໜາວ 300 ຜືນ (ຜູ້ໃຫຍ່) ຊາຍ 100 ຜືນ, ຍິງ 100 ຜືນ, ເດັກ 100 ຜືນ ລວມມູນຄ່າ 5,9 ລ້ານກີບ; ເຄື່ອງດັ່ງກ່າວ, ກໍາມາທິການບັນດາເຜົ່າ ຈະນໍາໄປມອບຕໍ່ໃຫ້ປະຊາຊົນຜູ້ດ້ອຍໂອກາດຢູ່ເຂດຫ່າງໄກສອກຫຼີກ.



# ຜົນສຳເລັດການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ຕໍ່ຈາກສະບັບກ່ອນ...

1) ຕໍ່ກັບການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ມີ 4 ບັນຫາ:

- ລັດຖະບານ ໄດ້ມີການຜັນຂະຫຍາຍມະຕິຂອງສະພາແຫ່ງຊາດເປັນນິຕິກຳ, ແຜນການ ແລະ ໂຄງການລະອຽດ, ແຕ່ຂອດການປະຕິບັດຍັງຊັກຊ້າ, ບາງຂະແໜງການບໍ່ທັນເປັນເອກະພາບກັນ, ບໍ່ທັນມີການປະເມີນຄວາມຄືບໜ້າຫຼາຍ;

- ການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກຜະລິດຕະພັນສິນຄ້າ ບໍ່ທັນບັນລຸຕາມແຜນການ, ການກຳນົດເຂດການຜະລິດສິນຄ້າໃນທ້ອງຖິ່ນຢູ່ລຽບຕາມເສັ້ນທາງລົດໄຟ ລາວ-ຈີນ, ເສັ້ນທາງດ່ວນ ບໍ່ທັນລະອຽດຊັດເຈນ, ການປຸງແຕ່ງບໍ່ທັນຫຼາຍ; ການເຂົ້າຫາແຫຼ່ງທຶນຍັງມີຄວາມຫຍຸ້ງຍາກ;

- ການສ້າງ ແລະ ບູລະນະເສັ້ນທາງທ້ອງຖິ່ນ ແລະ ເສັ້ນທາງຫຼວງແຫ່ງຊາດ ເພື່ອເຊື່ອມໂຍງກັບທາງດ່ວນ, ທາງລົດໄຟ ບໍ່ທັນມີຄວາມຄືບໜ້າເທົ່າທີ່ຄວນ;

- ການຂຸດຄົ້ນແຮ່ເຫຼັກແບບທົດລອງ ບໍ່ທັນມີປະສິດທິພາບເທົ່າທີ່ຄວນ, ບໍ່ສາມາດເລືອກໄດ້ບໍລິສັດ ທີ່ເປັນມືອາຊີບ, ການຂຸດຄົ້ນ ແລະ ສົ່ງອອກບໍ່ໄດ້ຕາມແຜນການ, ບໍ່ສາມາດເກັບລາຍຮັບໄດ້ຕາມແຜນການ.

2) ຕໍ່ກັບການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ເຫັນວ່າ:

ການຜັນຂະຫຍາຍຍັງຊັກຊ້າ, ບໍ່ທັນກາຍເປັນຂະບວນການທີ່ກວ້າງຂວາງ, ການປະຕິບັດຕາມພາລະບົດບາດ ຄວາມຮັບຜິດຊອບຍັງມີໜ້ອຍ ໂດຍສະເພາະ ໃນຂະແໜງການສຶກສາ, ສາທາລະນະສຸກ, ແຮງງານ ແລະ ອົງການຈັດຕັ້ງມະຫາຊົນ; ມີຄວາມຫຍຸ້ງຍາກດ້ານງົບປະມານ, ການປະເມີນກວດກາໜ້າວຽກທີ່ເຮັດໄປບໍ່ທັນໄດ້ດີ, ບັນຫາທີ່ຍັງບໍ່ທັນໄດ້ຮັບການແກ້ໄຂຍັງມີຫຼາຍ ເປັນຕົ້ນ:

- ສະຖານທີ່ຄຸມຂັງຊົ່ວຄາວຢູ່ຂັ້ນເມືອງ, ແຂວງຍັງຄັບແຄບ, ແອອັດ, ກັກຂັງປົນເປກັນ ລະຫວ່າງຜູ້ຕ້ອງຫາຄະດີຢາເສບຕິດ ກັບຜູ້ຕ້ອງຫາຄະດີອື່ນໆ;

- ສູນບຳບັດຍັງບໍ່ທັນພຽງພໍ ເພື່ອຮັບເອົາຜູ້ເສບຢາເສບຕິດມາບຳບັດ;

- ຊີວິດການເປັນຢູ່ຂອງຜູ້ຖືກກ່າວຫາ, ນັກໂທດ ຍັງພົບຄວາມຫຍຸ້ງຍາກຫຼາຍ;

- ການເກັບກຳຂໍ້ມູນ, ແຫຼ່ງຂ່າວກ່ຽວກັບການເຄື່ອນໄຫວຂອງເປົ້າໝາຍຢາເສບຕິດ ຍັງບໍ່ທັນລະອຽດ;

- ການດຳເນີນຄະດີ ຍັງຊັກຊ້າ, ຫຼາຍຄະດີຍັງຄ້າງຢູ່ໃນໄລຍະສືບສວນ-ສອບສວນຂອງເຈົ້າໜ້າທີ່ຢູ່;

- ວຽກງານຄຸ້ມຄອງ, ຕິດຕາມກວດກາ ການເຄື່ອນໄຫວຂອງເປົ້າໝາຍຕິດພັນກັບຢາເສບຕິດບໍ່ທັນແໜ້ນ, ເປັນລະບົບ, ຈະແຈ້ງ ແລະ ຮັດກຸມແທ້.

4.ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ

4.1 ຄະນະປະຈຳສະພາແຫ່ງຊາດ ໄດ້ນຳພາການດຳເນີນກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ແກ່ສະມາຊິກສະພາແຫ່ງຊາດ ເພື່ອຄົ້ນຄວ້າເນື້ອໃນບົດລາຍງານ ແລະ ບັນດາຮ່າງກົດໝາຍ ຈຳນວນ 26 ເນື້ອໃນ ໃຫ້ມີຄວາມເປັນເອກະພາບ ກ່ອນຈະນຳເອົາເນື້ອໃນ ມາພິຈາລະນາຮັບຮອງຢູ່ກອງປະຊຸມສະພາແຫ່ງຊາດ;

4.2 ຄະນະປະຈຳສະພາແຫ່ງຊາດ ໄດ້ຊີ້ນຳກຳມາທິການກ່ຽວຂ້ອງ ເພື່ອລົງສົມທົບກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈຳນວນ 15 ແຂວງ ເພື່ອເກັບ ກຳຂໍ້ມູນລະບົບການຈັດຕັ້ງ ແລະ ກົງຈັກຊ່ວຍວຽກຂອງສະພາທ້ອງຖິ່ນ, ຈັດຕັ້ງກອງປະຊຸມແລກປ່ຽນບົດຮຽນການ ເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ 2 ຄັ້ງ; ຈັດກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອປຶກສາຫາລືເຖິງລະບອບແບບແຜນວິທີເຮັດວຽກ, ກົນໄກປະສານງານ ແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານ; ສ້າງປຶ້ມຄູ່ມືຕ່າງໆ ເປັນຕົ້ນ ການພົບປະ ກັບປະຊາຊົນ, ການພິຈາລະນາ ແລະ ແກ້ໄຂວຽກງານສາຍດ່ວນ, ການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ ແລະ ວຽກງານອື່ນໆ; ຈັດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງເພື່ອປຶກສາວຽກງານປັບປຸງກົງຈັກເສນາທິການ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຄົ້ນຄວ້າ, ຍົກຍ້າຍ ແລະ ແຕ່ງຕັ້ງຮອງປະທານກຳມາທິການ ແລະ ສະມາຊິກສະພາແຫ່ງຊາດ ປະຈຳການຈຳນວນໜຶ່ງ; ຊັບຊ້ອນຄືນໃໝ່ການບັນຈຸສະມາຊິກສະພາແຫ່ງຊາດ ເຂົ້າສັງກັດກຳມາທິການຕ່າງໆ; ຄົ້ນຄວ້າ, ບັນຈຸຊັບຊ້ອນບຸກຄະລາກອນເຂົ້າໃນກົງຈັກພາຍໃນສະພາແຫ່ງຊາດ ເປັນລະບົບດີຂຶ້ນ ດ້ວຍການຂຽນຕຳແໜ່ງງານ ແລະ ສ້າງແຜນການກຳນົດພະນັກງານນຳພາ-ຄຸ້ມຄອງຂອງສະພາແຫ່ງຊາດ ສອດຄ່ອງກັບນິຕິກຳວາງອອກ ເຊິ່ງມາຮອດປັດຈຸບັນ ກົງຈັກເສນາທິການສະພາແຫ່ງຊາດ ໄດ້ຮັບການອະນຸມັດດ້ານຕຳແໜ່ງງານສຳເລັດໂດຍພື້ນຖານເທົ່າກັບ 82% ຂອງກົງຈັກທັງໝົດ ແລະ ພວມສືບຕໍ່ປະຕິບັດໃຫ້ສຳເລັດໃນປີ 2023.

4.3 ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ຊີ້ນຳ-ນຳພາວຽກງານການສ້າງຄວາມເຂັ້ມແຂງ ດ້ວຍການຈັດກອງປະຊຸມຝຶກອົບຮົມສຳມະນາຫົວຂໍ້ຕ່າງໆ ໄດ້ຈຳນວນ 54 ຄັ້ງ. ໃນນີ້, ໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຈຳນວນ 8 ຄັ້ງ ມີຫົວຂໍ້ຈຳນວນໜຶ່ງເຊັ່ນ: 1) ການປະຕິບັດພາລະບົດບາດຂອງສະພາ ແລະ ສະມາຊິກສະພາ; 2) ທັກສະການສ້າງນິຕິກຳ ແລະ ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ; 3) ທັກສະການຊັກຖາມ, ການປະກອບຄຳເຫັນຢູ່ກອງປະຊຸມສະພາ, ການລົງພົບປະຜູ້ມີສິດເລືອກຕັ້ງ ແລະ ການຕິດຕາມກວດກາ; 4) ການເຄື່ອນໄຫວວຽກງານ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ; 5) ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະ

ອ່ານຕໍ່ສະບັບໜ້າ...

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຫຍາຍມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 202/ຄປຈ, ລົງວັນທີ 12 ສິງຫາ 2022 ວ່າດ້ວຍການແຕ່ງຕັ້ງຄະນະທີ່ປຶກສາ ທີ່ບໍ່ປະຈຳການຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໂດຍມີບັນດາຈຸດປະສົງສະເພາະຄື: ເພື່ອເປັນການທຳຄວາມຮູ້ຈັກ ແລະ ຮັບຊາບກ່ຽວກັບທີ່ຕັ້ງ ແລະ ພາລະບົດບາດ ຂອງ ສພຊ ຊຸດທີ IX, ເວົ້າລວມ, ເວົ້າລະເພາະແມ່ນກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ສະເໜີໃຫ້ຮັບຊາບບັນດາວຽກຈຸດສຸມປະຈຳປີ 2023 ຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ປຶກສາຫາລືກ່ຽວກັບກົນໄກວິທີເຮັດວຽກ ແລະ ແຜນການເຄື່ອນໄຫວຂອງຄະນະທີ່ປຶກສາ ທີ່ບໍ່ປະຈຳການຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

(ນາງ ໄຊໂສພາພອນ ມິ່ງມຸງຄຸນ)

## ກອງປະຊຸມສະໄໝ...

(ຕໍ່ຈາກໜ້າ 1)

ປະທານສະພາປະຊາຊົນແຂວງໄຊຍະບູລີ; ໂດຍການເຂົ້າຮ່ວມຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານຄະນະປະຈຳສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ; ທ່ານ ພົງສະຫວັນ ສິດທະວົງ ເຈົ້າແຂວງໆໄຊຍະບູລີ; ມີຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າພະແນກການ, ກົມກອງ, ພະນັກງານປະຕິວັດອາວຸໂສບຳນານ, ແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ຈະໄດ້ພິຈາລະນາຮັບຮອງເອົາບັນດາເນື້ອໃນທີ່ສຳຄັນ ເປັນຕົ້ນແມ່ນຮັບຟັງການລາຍງານການເຄື່ອນໄຫວວຽກງານພົ້ນເດັ່ນປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງອົງການປົກຄອງແຂວງໄຊຍະບູລີ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023, ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານ ປີ 2022 ແລະ ທິດທາງແຜນການ ປີ 2023; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດສອບປະຈຳພາກເໜືອ; ຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2021; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດກາລັດແຂວງ; ຜົນການກວດກາ ຕາມຜົນການກວດສອບ ປີ 2020; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງສານປະຊາຊົນແຂວງ; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງອົງການໄອຍະການປະຊາຊົນແຂວງ; ຮັບຟັງການລາຍງານຂອງອົງການປົກຄອງແຂວງໄຊຍະບູລີ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ຂອງສະພາປະຊາຊົນແຂວງ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ຮັບຟັງການປະກອບຄຳເຫັນຂອງອົງການແນວລາວສ້າງຊາດແຂວງ ຕໍ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງໄຊຍະບູລີ ແລະ ພິຈາລະນາ, ຮັບຮອງເອົານິຕິກຳໃຕ້ກົດໝາຍ ຈຳນວນ 1 ສະບັບ.

ໃນກອງປະຊຸມ, ຍັງໄດ້ຮັບຟັງການປະກອບຄຳເຫັນຈາກຜູ້ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງຕໍ່ບັນດາບົດລາຍງານທີ່ອົງການປົກຄອງແຂວງ ດ້ວຍຄວາມຮັບຜິດຊອບສູງ ແລະ ການຕີລາຄາຢ່າງພາວະວິໄສ, ກົງໄປກົງມາ ໃນແຕ່ລະບັນຫາທີ່ອົງການປົກຄອງໄດ້ນຳມາສະເໜີ; ພ້ອມດຽວກັນນີ້, ຍັງໄດ້ຮັບຟັງການປະກອບຄຳຄິດຄຳເຫັນຈາກສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ເຊິ່ງເປັນເນື້ອໃນທີ່ມີຄວາມໝາຍສຳຄັນຍິ່ງສ່ອງເຖິງຄວາມຮັບຜິດຊອບການເມືອງ ຈາກຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ມາສູ່ກອງປະຊຸມໃນຄັ້ງນີ້. ກອງປະຊຸມຂອງພວກເຮົາ ຍັງໄດ້ຮັບຟັງການຊີ້ແຈງເພີ່ມເຕີມຈາກທ່ານເຈົ້າແຂວງ ເຊິ່ງໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫາສຳຄັນທີ່ສັງຄົມສົນໃຈ ແລະ ໄດ້ຕີລາຄາຢ່າງພາວະວິໄສ, ຖືກຕ້ອງສອດຄ່ອງກັບສະພາບຄວາມຈິງຂອງແຂວງໄຊຍະບູລີ; ພ້ອມນັ້ນ, ກອງປະຊຸມ ຍັງໄດ້ແຈ້ງຜົນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງບຸກຄະລາກອນຈຳນວນໜຶ່ງຂອງແຂວງ ເພື່ອເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງແຂວງມີຄວາມເຂັ້ມແຂງ, ມີປະສິດທິພາບ, ປະສິດທິຜົນ ເພື່ອບັນລຸຄາດໝາຍທີ່ວາງໄວ້.

ກອງປະຊຸມ, ຈະໄດ້ດຳເນີນໄປຈົນຮອດວັນທີ 10 ກຸມພາ 2023 ຈຶ່ງຈະສຳເລັດ.

(ນາງ ກຸກກິກ ບຸດດາໄຊ)

# ສືບຕໍ່ຍົກສູງຂີດຄວາມສາມາດໃນການຕິດຕາມກວດກາວຽກງານຍຸຕິທຳ



(ສພຊ) ໃນລະຫວ່າງວັນທີ 8-9 ກຸມພາ 2023 ທີ່ແຂວງເຊກອງ, ກຳມາທິການຍຸຕິທຳສະພາແຫ່ງຊາດ ໄດ້ຈັດກອງປະຊຸມສຳມະນາຍົກສູງຂີດຄວາມສາມາດໃນການຕິດຕາມກວດກາວຽກງານຍຸຕິທຳ ໂດຍການເປັນປະທານຮ່ວມລະຫວ່າງທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳສະພາແຫ່ງຊາດ ແລະ ທ່ານ ດົງເຜັດ ພະຍົນ ປະທານສະພາປະຊາຊົນແຂວງເຊກອງ, ມີທ່ານເລຂາທິການສະພາປະຊາຊົນແຂວງເຊກອງ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງສັງກັດກຳມາທິການຍຸຕິທຳຈາກ 7 ແຂວງຄື: ແຂວງບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ແຂວງອັດຕະປື ພ້ອມດ້ວຍແຂກທີ່ຖືກເຊີນເຂົ້າຮ່ວມ ເຊິ່ງກອງປະຊຸມຄັ້ງນີ້ໄດ້ຮັບການສະໜັບສະໜູນທຶນຈາກໂຄງການຊ່ວຍເຫຼືອຂອງມູນນິທິເວສມິນສະເຕີ(WFD).

ທັງນີ້ ເພື່ອເປັນການເຮັດໃຫ້ການຕິດຕາມກວດກາວຽກງານໃນຂົງເຂດຍຸຕິທຳໄດ້ຮັບການຈັດຕັ້ງປະຕິບັດຢ່າງມີໝາກຜົນ ຈຶ່ງມີຄວາມຈຳເປັນເພີ່ມທະວີ ແລະ ຍົກສູງຄຸນນະພາບຂອງສະມາຊິກສະພາແຫ່ງຊາດ ທີ່ສັງກັດກຳມາທິການຍຸຕິທຳ ໃຫ້ຮັບຮູ້, ເຂົ້າໃຈ ແລະ ສາມາດປະຕິບັດພາລະບົດບາດຕິດຕາມກວດກາຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ໄດ້ເປັນຢ່າງດີ; ຍົກສູງຂີດຄວາມສາມາດຂອງພະນັກງານ-ລັດຖະກອນ ຂອງກຳມາທິການຍຸຕິທຳ; ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ ໂດຍສະເພາະແມ່ນການຄົ້ນຄວ້າ, ເກັບກຳຂໍ້ມູນ, ວິເຄາະວິໄຈ ແລະ ສະໜອງຂໍ້ມູນ ກ່ຽວກັບການຕິດຕາມກວດກາວຽກງານຍຸຕິທຳ ໃຫ້ແກ່ຄະນະກຳມາທິການຍຸຕິທຳ ສະພາແຫ່ງຊາດ ແລະ ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໃນການປະກອບຄຳເຫັນ, ຊັກຖາມໃນທີ່ປະຊຸມ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນໃນການຕິດຕາມກວດກາມີຜົນສັກສິດຍິ່ງຂຶ້ນ.

ກອງປະຊຸມ, ໄດ້ຮັບຟັງການສະເໜີບົດການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ການຕິດຕາມກວດກາວຽກງານຍຸຕິທຳ, ການສະເໜີບົດການຄົ້ນຄວ້າການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງບຸກຄະລາກອນຂອງສານປະຊາຊົນ; ຈາກນັ້ນ, ຜູ້ເຂົ້າຮ່ວມ ໄດ້ພ້ອມກັນປະກອບຄຳຄິດຄຳເຫັນຢ່າງສ້າງສັນ, ມີຈຸດສຸມ ແລະ ກົງໄປກົງມາ; ກອງປະຊຸມ ຍັງໄດ້ແລກປ່ຽນບົດຮຽນ ແລະ ປະສົບການຂອງບາງເຂດເລືອກຕັ້ງ ໃນການຈັດຕັ້ງປະຕິບັດວຽກງານຕິດຕາມກວດກາຂອງຄະນະກຳມະການຍຸຕິທຳ, ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ ແລະ ແລກປ່ຽນບົດຮຽນການຕິດຕາມກວດກາໂດຍຜ່ານຄຳຮ້ອງຂໍຄວາມເປັນທຳ.

ໃນພິທີເປີດກອງປະຊຸມ, ທ່ານ ຄຳແພງ ວິລະພັນ ໄດ້ມີຄຳເຫັນບາງຕອນວ່າ: ກອງປະຊຸມສຳມະນາຍົກສູງຂີດຄວາມສາມາດ ໃນການຕິດຕາມກວດກາວຽກງານຍຸຕິທຳຄັ້ງນີ້ ມີຄວາມໝາຍສຳຄັນເປັນຢ່າງຍິ່ງບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ເຫັນວ່າມີຄວາມໝາຍສຳຄັນເຖິງວ່າຈະມີເວລາຈຳກັດ; ສະນັ້ນ, ເພື່ອເຮັດໃຫ້ບັນດາເນື້ອໃນຂອງກອງປະຊຸມໄດ້ຮັບພິຈາລະນາ, ຄົ້ນຄວ້າຢ່າງເລິກເຊິ່ງ ຮຽກຮ້ອງມາຍັງບັນດາທ່ານຄະນະນຳ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຜູ້ແທນກອງປະຊຸມ ຈົ່ງນຳໃຊ້ສິດປະຊາທິປະໄຕ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ ຕໍ່ກັບບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມໃນຄັ້ງນີ້ ຢ່າງກົງໄປກົງມາ, ມີເຫດມີຜົນ ເພື່ອເຮັດໃຫ້ບັນດາເນື້ອໃນຕ່າງໆນັ້ນ ສາມາດຮັບຮອງເອົາ ແລະ ນຳໄປຈັດຕັ້ງຜັນຂະຫຍາຍ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນຕໍ່ໜ້າໃຫ້ມີຜົນສຳເລັດຫຼາຍຂຶ້ນກວ່າເກົ່າ.

(ສອນສັກ ວັນວິໄຊ)

## ທ່ານ ປອ. ໄຊສົມພອນ...

(ຕໍ່ຈາກໜ້າ 1)

(ສພຊ) ໃນວັນທີ 8 ກຸມພາ 2023 ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຮ່ວມກັບຄະນະພັກ, ອົງການປົກຄອງ, ພະນັກງານຫຼັກແຫຼ່ງຂອງເມືອງເຟືອງ ແຂວງວຽງຈັນ; ໂອກາດດັ່ງກ່າວ, ທ່ານປະທານສະພາແຫ່ງຊາດ ໄດ້ມີບາງຄຳເຫັນເນັ້ນຕໍ່ຄະນະພັກ, ຄະນະນຳ ຂອງເມືອງເຟືອງ ດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ: (1) ຄະນະພັກ, ອົງການປົກຄອງເມືອງ ຈະຕ້ອງໄດ້ສືບຕໍ່ຍຶດໝັ້ນ ແລະ ເດັດດ່ຽວນຳພາ ພາລະກິດປົກປັກຮັກສາທ້ອງຖິ່ນຂອງຕົນ ດ້ວຍການຜັນຂະຫຍາຍແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານຢ່າງທົ່ວເຖິງ ແລະ ເລິກເຊິ່ງ; ສ້າງ ແລະ ປັບປຸງຕາໜ່າງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ເຂັ້ມແຂງ, ໜັກແໜ້ນ; ສະກັດກັ້ນ ອາດຊະຍາກຳຕ່າງໆຢ່າງທັນການ, ເດັດຂາດ ແລະ ເຂັ້ມງວດ; ເອົາໃຈໃສ່ການຄຸ້ມຄອງສຳມະໂນຄົວ, ການຄຸ້ມຄອງຄົນຕ່າງປະເທດໃຫ້ເຂັ້ມງວດຕາມກົດໝາຍ; (2) ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ III ຂອງເມືອງເຟືອງ ໄດ້ກຳນົດທ່າແຮງບົ່ມຊ້ອນຂອງເມືອງໃນຫຼາຍດ້ານ; ສະນັ້ນ, ສະເໜີໃຫ້ຄະນະພັກ, ອົງການປົກຄອງເມືອງ ເພີ່ມທະວີການນຳພາ-ຊີ້ນຳຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າວາງແຜນ ແລະ ຈັດແບ່ງເຂດການຜະລິດກະສິກຳໃຫ້ເໝາະສົມ, ຄົ້ນຄວ້າກຳນົດທ່າແຮງບົ່ມຊ້ອນທາງດ້ານການຜະລິດກະສິກຳຂອງເມືອງເພື່ອສຸມທຶນຮອນເຕັກນິກວິຊາການ ເຂົ້າໃສ່ການຜະລິດເປັນສິນຄ້າຂອງປະຊາຊົນ ເປັນຕົ້ນ: ການປູກເຂົ້າ, ພືດຜັກ, ໄມ້ໃຫ້ໝາກ, ການປູກໄມ້ອຸດສາຫະກຳ, ການປູກຜັກປອດສານພິດ, ການປູກຫຍ້າເພື່ອລ້ຽງສັດ; ການລ້ຽງສັດໃຫຍ່ເປັນສິນຄ້າ, ການລ້ຽງປາ ແລະ ອື່ນໆ ເພື່ອສ້າງອາຊີບ ແລະ ລາຍຮັບອັນໝັ້ນຄົງໃຫ້ພໍ່ແມ່ປະຊາຊົນ; ສົ່ງເສີມການຜະລິດກະສິກຳເປັນກຸ່ມ, ເປັນຟາມ, ສະຫະກອນແບບໃໝ່ ເພື່ອຂະຫຍາຍຖານການຜະລິດໃຫ້ກວ້າງໃຫຍ່ແລະມີຜົນຜະລິດຈຳນວນຫຼາຍ, ມີທ່າແຮງໃນການເຂົ້າເຖິງແຫຼ່ງທຶນ ແລະ ການເຂົ້າເຖິງຕະຫຼາດທີ່ມີປະສິດທິພາບ ເຊິ່ງຈະກາຍເປັນຖານລາຍຮັບງົບປະມານຂອງເມືອງ ໃນຕໍ່ໜ້າ; (3) ທ່າແຮງດ້ານການທ່ອງທ່ຽວທຳມະຊາດ-ວັດທະນະທຳຂອງເມືອງເຟືອງ ກໍມີຫຼາຍດ້ານ ສະນັ້ນ, ຄະນະພັກ, ອົງການປົກຄອງເມືອງ ຈະຕ້ອງໄດ້ເອົາໃຈໃສ່ນຳພາຊີ້ນຳ ໃນການປົກປັກຮັກສາແຫຼ່ງທ່ອງທ່ຽວໃຫ້ຍືນຍົງ ແລະ ພັດທະນາຄຸນຄ່າຂອງແຫຼ່ງທ່ອງທ່ຽວ ໃຫ້ຄົງຢູ່ຍາວນານຮອດເຊັ່ນລູກເຊັ່ນຫຼານເຮົາຕະຫຼອດໄປ. ພ້ອມກັນນັ້ນ, ກໍເອົາໃຈໃສ່ຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າຂອງປະຊາຊົນ ຕິດພັນກັບການທ່ອງທ່ຽວດັ່ງກ່າວ ໂດຍສະເພາະການຜະລິດຫັດຖະກຳ, ການປຸງແຕ່ງຜົນຜະລິດກະສິກຳ ທີ່ມີການຫຸ້ມຫໍ່, ເປັນເອກະລັກຂອງເມືອງ ເພື່ອເປັນຂອງຕ້ອນຂອງຝາກແຂກຄົນ ທີ່ມາທ່ອງທ່ຽວເມືອງເຟືອງ; (4) ຄະນະພັກ, ອົງການປົກຄອງເມືອງເຟືອງ ຈະຕ້ອງໄດ້ເອົາໃຈໃສ່ ລົງເລິກຕິດຕາມກວດກາເບິ່ງຄຸນນະພາບການສຶກສາຢູ່ໂຮງຮຽນ ໃຫ້ຮັບປະກັນດ້ານມາດຕະຖານ; ການພັດທະນາການສຶກສາຂອງຂະແໜງວິຊາສະເພາະດ້ານຕ່າງໆ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາ, ສາມາດສ້າງວຽກເຮັດງານທຳໃຫ້ແກ່ລູກຫຼານ ທີ່ຮຽນຈົບວິຊາສະເພາະຂະແໜງຕ່າງໆ ໃຫ້ມີວຽກເຮັດງານທຳ; (5) ສະເໜີໃຫ້ ຄະນະພັກ, ອົງການປົກຄອງເມືອງ ເພີ່ມທະວີຄວາມເອົາໃຈໃສ່ໃນການສ້າງເງື່ອນໄຂໃຫ້ພໍ່ແມ່ປະຊາຊົນ ສາມາດເຂົ້າເຖິງການປິ່ນປົວຢ່າງກວ້າງຂວາງ, ສະດວກ ແລະ ມີປະສິດທິພາບ; ເອົາໃຈໃສ່ປັບປຸງໂຮງໝໍເມືອງ, ໂຮງໝໍນ້ອຍ ດ້ວຍການປະກອບອຸປະກອນ, ເຄື່ອງມືດ້ານການແພດ ທີ່ສາມາດຍົກສູງປະສິດສິພາບໃນການປິ່ນປົວໃຫ້ສູງຂຶ້ນ; ເພີ່ມຄວາມສາມາດໃນການເຝົ້າລະວັງຕິດຕາມ, ບົ່ງມະຕິ, ຊອກຄົ້ນຫາ ແລະ ໂຕ້ຕອບກໍລະນີພະຍາດລະບາດໃຫ້ໄດ້ໄວ; (6) ມາຮອດປັດຈຸບັນ ສະພາບການລະບາດຂອງພະຍາດໂຄວິດ-19 ໄດ້ກັບຄືນສູ່ປົກກະຕິແລ້ວ ຈຶ່ງມີຄວາມຈຳເປັນໃນການຊຸກຍູ້ການຮຽນຂອງລູກຫຼານ, ປັບປຸງຄຸນນະພາບການສຶກສາໃຫ້ສູງຂຶ້ນ, ເອົາໃຈໃສ່ການສ້າງ ແລະ ສ້ອມແປງໂຮງຮຽນ ເພື່ອອຳນວຍຄວາມສະດວກໃຫ້ແກ່ລູກຫຼານໄດ້ເຂົ້າຮຽນ, ປະກອບປຶ້ມແບບຮຽນ, ອຸປະກອນການຮຽນ ພ້ອມທັງສ້າງເງື່ອນໄຂການເຂົ້າເຖິງການສຶກສາ ແລະ ຂະຫຍາຍຕາໜ່າງການສຶກສາໃຫ້ມີຄຸນນະພາບນັບມື້ສູງຂຶ້ນ ແລະ ທົ່ວເຖິງຢູ່ເຂດຫ່າງໄກສອກຫຼີກ; (7) ສະເໜີໃຫ້ຄະນະພັກ, ອົງການປົກຄອງເມືອງເຟືອງ ເອົາໃຈໃສ່ການຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງຂອງຕົນ ໃຫ້ມີປະສິດທິພາບ, ເຮັດໃຫ້ກົງຈັກກະທັດຮັດເປັນລະບົບໂລ່ງລ່ຽນ, ຮັບປະກັນການປະຕິບັດໜ້າທີ່ວຽກງານ; ສະກັດກັ້ນການນຳໃຊ້ສິດ,ອຳນາດໃນທາງທີ່ບໍ່ຖືກກົດໝາຍ ຂອງເຈົ້າໜ້າທີ່ຂອງລັດທຸກຂັ້ນ; ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ປະຊາຊົນ ສາມາດເຂົ້າເຖິງຂະບວນການຍຸຕິທຳ ເຮັດໃຫ້ຄວາມເຊື່ອໝັ້ນຂອງປະຊາຊົນ ຕໍ່ພັກ-ລັດດີຂຶ້ນເລື້ອຍໆ. ສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າ ສາມາດເຂົ້າຮ່ວມ, ປະກອບຄຳເຫັນ, ຕິດຕາມກວດກາການບໍລິຫານລັດຕາມແນວທາງຂອງພັກ.

2. ວຽກງານການກໍ່ສ້າງຮາກຖານການເມືອງ: (1) ການກໍ່ສ້າງຮາກຖານການເມືອງເປັນວຽກງານທີ່ມີຄວາມສຳຄັນຫຼາຍ. ສະນັ້ນ, ຄະນະພັກ, ອົງການປົກຄອງເມືອງເຟືອງ ຈະຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ວຽກງານການກໍ່ສ້າງຮາກຖານການເມືອງ, ລົງໃກ້ຊິດຕິດແທດກັບພໍ່ແມ່ປະຊາຊົນຢ່າງແທດເຖິງ; (2) ການກໍ່ສ້າງຮາກຖານການເມືອງ ມີຄວາມຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພັດທະນາເສດຖະກິດ-ສັງຄົມ. ສະນັ້ນ, ຈຶ່ງສະເໜີໃຫ້ຄະນະພັກ, ອົງການປົກຄອງເມືອງ ເພີ່ມທະວີຄວາມເອົາໃຈໃສ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອເປັນເງື່ອນໄຂຂອງການສ້າງສາພັດທະນາເມືອງເຟືອງ; (3) ຄະນະພັກ, ອົງການປົກຄອງເມືອງ ຕ້ອງກຳແໜ້ນຮາກຖານການເມືອງຂອງຕົນ, ຮັບຮູ້ໄດ້ເຖິງບັນຫາທີ່ຈະເປັນຊ່ອງວ່າງ ທີ່ຄົນບໍ່ດີສວຍໃຊ້ເຂົ້າໃນການແຊກແຊງ, ມ້າງເພທຳລາຍຮາກຖານການເມືອງ ເປັນຕົ້ນ ພະຍາດອາດຍາສິດຂອງພະນັກງານ, ປາກົດການຫຍໍ້ທໍ້ໃນກົງຈັກລັດ, ການສໍ້ລາດບັງຫຼວງ ແລະ ອື່ນໆ, ບັນຫາດັ່ງກ່າວ ຕ້ອງມີທິດທາງໃນການແກ້ໄຂຢ່າງເປັນຮູບປະທຳ.

3. ການພັດທະນາຊົນນະບົດ: (1) ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເນື້ອແທ້ແມ່ນການປົວແປງຊີວິດການເປັນຢູ່ ແລະ ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນ ເລີ່ມແຕ່ຮາກຖານຂຶ້ນມາ ໃຫ້ນັບມື້ດີຂຶ້ນ; (2) ການລົງທຶນຂອງລັດເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງເຖິງວ່າທຶນຮອນ, ງົບປະມານມີຈຳກັດ ແຕ່ພັກ-ລັດ ກໍໄດ້ຈັດສັນໃຫ້ວຽກງານດັ່ງກາວ ຈຶ່ງສະເໜີໃຫ້ຄະນະພັກ, ອົງການປົກຄອງເມືອງ ເອົາໃຈໃສ່ຕິດຕາມ, ກວດກາ ແລະ ຄຸ້ມຄອງການນຳໃຊ້ທຶນຮອນດັ່ງກ່າວໃຫ້ຕິດພັນກັບການພັດທະນາແທ້ ແລະ ນຳຜົນປະໂຫຍດຕົວຈິງມາໃຫ້ປະຊາຊົນ; (3) ຄະນະພັກ, ອົງການປົກຄອງເມືອງຈະຕ້ອງໄດ້ເອົາໃຈໃສ່ນຳພາຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າຈັດສັນທີ່ດິນ ເພື່ອນຳໃຊ້ເຂົ້າໃນການຜະລິດກະສິກຳເປັນສິນຄ້າປະເພດຕ່າງໆ ຢ່າງມີປະສິດທິຜົນ ເພື່ອສຸມທຶນຮອນ, ເຕັກນິກ ແລະ ນຳພາປະຊາຊົນເຮັດການຜະລິດ ເພື່ອສ້າງອາຊີບ, ສ້າງລາຍຮັບ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

4. ວຽກງານ 3 ສ້າງ: ວຽກງານສາມສ້າງ ເປັນວຽກງານທີ່ມີຄວາມສຳຄັນ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນຮາກຖານ ເພື່ອເສີມຂະຫຍາຍສິດເປັນເຈົ້າຂອງທ້ອງຖິ່ນຮາກຖານດ້ວຍການມອບສິດ, ມອບຄວາມຮັບຜິດຊອບໃນການບໍລິຫານລັດ ແລະ ການຄຸ້ມຄອງເສດຖະກິດ-ສັງຄົມ ເພື່ອຍົກສູງຄວາມສາມາດໃນການກຸ້ມຕົນເອງໃຫ້ນັບມື້ຫຼາຍຂຶ້ນ ເພື່ອບັນລຸຜົນສຳເລັດດັ່ງກ່າວ ສິ່ງທີ່ຄະນະພັກ, ອົງການປົກຄອງເມືອງ ຈະຕ້ອງໄດ້ເອົາໃຈໃສ່ ການທັນພະນັກງານ, ທັນງົບປະມານ ໄປເພີ່ມໃຫ້ທ້ອງຖິ່ນ ເປັນຕົ້ນ ແມ່ນຂັ້ນເມືອງ ແລະ ໄປນຳພາເຮັດຕົວຈິງຢູ່ຮາກຖານບ້ານ.

ໂອກາດດັ່ງກ່າວ, ທ່ານປະທານສະພາແຫ່ງຊາດ ຍັງໄດ້ນຳເອົາຜົນສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ໄດ້ດຳເນີນໃນລະຫວ່າງວັນທີ 5-30 ທັນວາ 2022 ຜ່ານມາ ເຊິ່ງກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ຫຼາຍວຽກງານ ເປັນຕົ້ນ: ການພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານ; ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ; ການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນ; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ; ການພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 12 ສະບັບ ໃນນັ້ນ, ສ້າງໃໝ່ 3 ສະບັບ ແລະ ປັບປຸງ 9 ສະບັບ; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງສະພາແຫ່ງຊາດ; ການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍແຕ່ປີ 2023-2025; ການຊີ້ແຈງຂອງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງ ຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ.

ໂອກາດດັ່ງກ່າວ, ຄະນະ ໄດ້ນຳເອົາຄອມພິວເຕີ ຈຳນວນ 5 ຊຸດ ມູນຄ່າ 25 ລ້ານກີບ ມອບໃຫ້ເມືອງເຟືອງແຂວງວຽງຈັນ ຕື່ມອີກ.

# ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II




(ສພຊ) ໃນວັນທີ 31 ມັງກອນ 2023 ສະພາປະຊາຊົນແຂວງວຽງຈັນ ໄດ້ໄຂກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ທີ່ສະໂມສອນໃຫຍ່ຫ້ອງວ່າການແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນສອນ ເຜີດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີທ່ານ ຄຳພັນ ສິດທິດຳພາ ເຈົ້າແຂວງແຂວງວຽງຈັນ, ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ສະມາຊິກສະພາແຫ່ງຊາດຊຸດທີ IX ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ, ສະມາຊິກສະພາປະຊາຊົນແຂວງວຽງຈັນ ຊຸດທີ II, ເຈົ້າເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງ ພະນັກງານຜູ້ຊົງຄຸນວຸດທິອາວຸໂສບຳນານ ແລະ ບັນດາລັດວິສາຫະກິດ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້ ໄດ້ພິຈາລະນາ, ຮັບຮອງເອົາບັນດາເນື້ອໃນສຳຄັນຕ່າງໆ ເປັນຕົ້ນແມ່ນພິຈາລະນາ, ຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ທິດທາງປະຈຳປີ 2023; ພິຈາລະນາ, ຮັບຮອງເອົາ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022 ແລະ ທິດທາງ ປະຈຳປີ 2023; ພິຈາລະນາ, ຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງອົງການກວດສອບພາກກາງ ປະຈຳປີ 2022, ທິດທາງແຜນການເຄື່ອນໄຫວ ປະຈຳປີ 2023 ແລະ ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວງົບປະມານ ປະຈຳປີ 2021 ແລະ ເອກະສານລາຍງານການເງິນວິສາຫະກິດລັດລົງທຶນ ປະຈຳປີ 2021 ຂອງແຂວງວຽງຈັນ ແລະ ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວ ປະຈຳປີ 2023 ຂອງອົງການກວດກາລັດແຂວງວຽງຈັນ; ພິຈາລະນາ, ຮັບຮອງເອົາການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງວຽງຈັນ; ພິຈາລະນາ, ຮັບຮອງເອົາຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດ ຂອງແຂວງວຽງຈັນ; ພິຈາລະນາ, ຮັບຮອງເອົາຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການສະກັດກັ້ນ ແລະ ຫຼຸດຜ່ອນອຸບັດຕິເຫດຕາມເສັ້ນທາງບົກທົ່ວແຂວງວຽງຈັນ; ພິຈາລະນາ, ຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II.

ນອກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການລາຍງານບາງວຽກງານທີ່ພົ້ນເດັ່ນຂອງແຂວງຈຳນວນໜຶ່ງ ເປັນຕົ້ນແມ່ນບົດລາຍງານການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາກາຍຍະກຳ, ບົດລາຍງານການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮ່ວມມືການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ບັນຫາສຳຄັນອື່ນໆອີກຈຳນວນໜຶ່ງ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ຈະໄດ້ດຳເນີນເປັນເວລາ 4 ວັນເຕັມ ສະມາຊິກສະພາປະຊາຊົນແຂວງ ຊຸດທີ II ຈະໄດ້ນຳໃຊ້ສິດປະຊາທິປະໄຕ ແລະ ເຊີດຊູຄວາມຮັບຜິດຊອບຂອງຕົນໃນການຄົ້ນຄວ້າ, ປະກອບຄຳເຫັນຢ່າງຖີ່ຖ້ວນ ຢ່າງພາວະວິໄສ ແລະ ເລິກເຊິ່ງ ບົນພື້ນຖານແນວທາງນະໂຍບາຍລະບຽບກົດໝາຍ, ກົດໝາຍ ແລະ ສະພາບຄວາມເປັນຈິງ ທາງດ້ານເສດຖະກິດ-ສັງຄົມຂອງແຂວງວຽງຈັນໃນປັດຈຸບັນ ເພື່ອເຮັດໃຫ້ເນື້ອໃນທີ່ຈະນຳມາພິຈາລະນາ, ຮັບຮອງໃນຄັ້ງນີ້ ມີຄຸນນະພາບ ແລະ ສາມາດນຳໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ແລະ ເພື່ອເຮັດໃຫ້ກອງປະຊຸມຄັ້ງນີ້ ມີຄວາມສົມບູນ ແລະ ໜັກແໜ້ນຈຶ່ງຂໍເຊີນຊວນປະຊາຊົນບັນດາເຜົ່າພາຍໃນແຂວງວຽງຈັນຈົ່ງຕິດຕາມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ຄັ້ງນີ້ ຈົນສຳເລັດ ພ້ອມທັງເປີດກວ້າງໃຫ້ຜູ້ມີສິດເລືອກຕັ້ງ ມີຄຳຄິດຄຳເຫັນ ແລະ ສະເໜີຜ່ານໂທລະສັບສາຍດ່ວນ 023 156 ໃນໄລຍະດຳເນີນກອງປະຊຸມນີ້ຕື່ມອີກ.

# ປະທານສະພາປະຊາຊົນແຂວງ ໂອ້ລົມພະນັກງານ ອົງການໄອຍະການປະຊາຊົນ ແລະ ພະແນກຍຸຕິທຳ



(ສພຊ) ທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງຫຼວງນ້ຳທາ ຜູ້ຊີ້ນຳວຽກງານອົງການໄອຍະການປະຊາຊົນ, ພະແນກຍຸຕິທຳ ແລະ ສານປະຊາຊົນແຂວງ ໄດ້ຢ້ຽມຢາມ, ໂອ້ລົມພະນັກງານຢູ່ອົງການໄອຍະການປະຊາຊົນແຂວງ ແລະ ພະແນກຍຸຕິທຳແຂວງ ເມື່ອກາງເດືອນມັງກອນຜ່ານມາ.

ໃນໂອກາດນີ້, ທ່ານ ນາງ ວອນແສງ ບົວດອກທອງ ຫົວໜ້າອົງການໄອຍະການປະຊາຊົນແຂວງ ແລະ ທ່ານ ນາງ ມະລິພອນ ນາບຸນແພງ ຫົວໜ້າພະແນກຍຸຕິທຳແຂວງ ໄດ້ລາຍງານຫຍໍ້ກ່ຽວກັບຜົນງານການຈັດຕັ້ງປະຕິບັດວຽກງານຂອງຕົນ ເຊິ່ງຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນໄລຍະຜ່ານມາ ພ້ອມທັງສະເໜີບັນຫາທີ່ຍັງພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານຕົວຈິງ.

ໂອກາດດັ່ງກ່າວ, ທ່ານ ຄຳຟອງ ອິນມານີ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໜັກ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຂອງອົງການໄອຍະການປະຊາຊົນແຂວງ ແລະ ພະແນກຍຸຕິທຳແຂວງໃນໄລຍະຜ່ານມາ ພ້ອມທັງເນັ້ນໜັກໃຫ້ເພີ່ມທະວີຄວາມກະຕືລືລົ້ນຄວາມເປັນເຈົ້າການຄວາມເປັນແບບຢ່າງທີ່ດີ, ເອົາໃຈໃສ່ ສ້າງແຜນການແຜນງານລະອຽດເພື່ອແກ້ໄຂບັນຫາຄົງຄ້າງ, ເພີ່ມທະວີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ, ເພີ່ມທະວີຄວາມເຄັ່ງຄັດເຂັ້ມງວດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ສືບຕໍ່ເຮັດວຽກງານການເມືອງນຳພາແນວຄິດໃຫ້ດີ, ວຽກງານກໍ່ສ້າງພັກກໍ່ສ້າງພະນັກງານ, ເພີ່ມຄວາມສາມັກຄີເປັນເອກະພາບ, ເພີ່ມທະວີການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍແຕ່ລະຂົງເຂດວຽກງານໃຫ້ດີຂຶ້ນກວ່າເກົ່າ.

# ກອງປະຊຸມຮ່ວມຂອງຄະນະເລຂາທິການ ສະພາປະຊາຊົນ ແລະ ຫ້ອງວ່າການແຂວງ




(ສພຊ) ໃນຕອນເຊົ້າຂອງວັນທີ 30 ມັງກອນ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ ໄດ້ຈັດກອງປະຊຸມຮ່ວມ ລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງ ກັບຫ້ອງວ່າການແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ວັນນາ ພິມວິສອນ ເລຂາທິການສະພາປະຊາຊົນແຂວງໄຊຍະບູລີ ແລະ ທ່ານ ພອນສະຫວັນ ໄຊສົມພັນ, ຫົວໜ້າຫ້ອງວ່າການແຂວງໄຊຍະບູລີ; ເຂົ້າຮ່ວມມີບັນດາຮອງເລຂາທິການສະພາປະຊາຊົນແຂວງ, ຮອງຫົວໜ້າຫ້ອງວ່າການແຂວງ, ມີຫົວໜ້າ-ຮອງຫົວໜ້າຂະແໜງການ ແລະ ພະນັກງານວິຊາການທີ່ກ່ຽວ ຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງຄະນະເລຂາທິການສະພາປະຊາຊົນແຂວງ ກ່ຽວກັບການຕີລາຄາການຈັດຕັ້ງປະຕິບັດຂໍ້ຕົກລົງຮ່ວມ ສະບັບເລກທີ 02/ຄລຂ.ສພຂ-ຫວຂ.ຊຍ, ລົງວັນທີ 11 ມັງກອນ 2022 ໃນໄລຍະຜ່ານມາ ແລະ ທິດທາງແຜນການ ປະຈຳປີ 2023, ຮັບຟັງການເຜີຍແຜ່ມະຕິຂອງຄະນະປະຈຳສະພາປະຊາ ຊົນແຂວງ ສະບັບເລກທີ 20/ຄປຈ.ຊຍ, ລົງວັນທີ 20/4/ 2022 ວ່າດ້ວຍການແຕ່ງຕັ້ງຄະນະຄົ້ນຄວ້າຄຳສະເໜີຂອງປະຊາຊົນ ແລະ ແນວລາວສ້າງຊາດ ແລະ ຂໍ້ຕົກລົງການແຕ່ງຕັ້ງຄະນະຮັບຜິດຊອບ ປະສານງານກັບຫ້ອງວ່າການແຂວງ ແລະ ຮັບຟັງການຜ່ານຂໍ້ຕົກລົງຂອງຄະນະເລຂາທິການສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບປະສານງານ ກັບ ຫ້ອງວ່າການແຂວງບົດລາຍງານຂອງອົງການປົກຄອງແຂວງ ພ້ອມທັງຄົ້ນຄວ້າບັນຫາສຳຄັນຈຳນວນໜຶ່ງ ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນປະກອບຄຳຄິດຄຳເຫັນແລກປ່ຽນບົດຮຽນ ແລະ ສະເໜີທິດທາງແຜນການໃນຕໍ່ໜ້າໃສ່ບົດລາຍງານດັ່ງກ່າວ ຢ່າງກົງໄປກົງມາ.

ຕອນທ້າຍປະທານກອງປະຊຸມ ຍັງໄດ້ມີຄຳເຫັນຊີ້ນຳ ທັງໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານໃນໄລຍະຜ່ານມາ ເຫັນວ່າເຮັດສຳເລັດໃນຫຼາຍດ້ານ ແຕ່ວ່າກໍຍັງມີອັນທີ່ຕ້ອງປັບປຸງໃນບາງພາກສ່ວນ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງເພື່ອໃຫ້ສາມາດປະຕິບັດໄດ້ໃນຕໍ່ໜ້າ ພ້ອມທັງຈະນຳເອົາເນື້ອໃນຈິດໃຈກອງປະຊຸມໃນຄັ້ງນີ້ ນຳໄປປັບປຸງແກ້ໄຂບາງຈຸດທີ່ຍັງເປັນຂໍ້ຄົງຄ້າງໃຫ້ດີຍິ່ງໆຂຶ້ນໄປ ເພື່ອໃຫ້ເກີດດອກອອກຜົນ ແລະ ປະສົບຜົນສຳເລັດໃນການປະສານງານກັນໃນບັນດາໜ້າວຽກທີ່ກ່ຽວຂ້ອງ.

(ອິນທີ ຂຽວສີຟ້າ)

# ກອງປະຊຸມຄົບຄະນະຂອງ 2 ຄະນະກຳມະການ ສພຂ ອັດຕະປື ປະຈຳປີ 2022




(ສພຊ) ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ຈັດກອງປະຊຸມປະຈຳປີ ໃນວັນທີ 27 ມັງກອນ 2022 ໂດຍເປັນປະທານຂອງທ່ານ ຈັນທະລີ ສີສຸວົງ ປະທານ ຄຍປປ; ເປັນປະທານຮ່ວມໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ ທັງເປັນຜູ້ຊີ້ນຳວຽກງານ ປກຊ-ປກສ, ມີບັນດາທ່ານຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ທີ່ເປັນຄະນະກຳມະການ ປກຊ-ປກສ, ຫົວໜ້າ-ຮອງຫົວໜ້າພະແນກ ແລະ ພາກສ່ວນທີ່ກ່ຽວຂ້ອງໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຂົ້າຮ່ວມຈຳນວນ 48 ທ່ານ, ຍິງ 7 ທ່ານ.

ກອງປະຊຸມຄັ້ງນີ້, ແມ່ນເພື່ອສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະ ປະກອບຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວປະຈຳປີ 2023 ຂອງ ຄຍປປ, ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງວຽກງານຈຸດສຸມປີ 2023 ຂອງອົງການໄອຍະການປະຊາຊົນ, ສານປະຊາຊົນ ທີ່ຈະນຳສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II, ປະກອບຄຳເຫັນໃສ່ຮ່າງບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງວຽກງານຈຸດສຸມ ປີ 2023 ຂອງອົງການສືບສວນ-ສອບສວນ (ອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດ, ອົງການສືບສວນ-ສອບສວນ ເຈົ້າໜ້າທີ່ທະຫານອົງການສືບສວນ-ສອບສວນ ເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ); ບົດປະກອບຄຳເຫັນໃສ່ບົດລາຍງານຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະຂອງກອງບັນຊາການປ້ອງກັນຄວາມສະຫງົບ ເພື່ອເກັບກຳຂໍ້ມູນຈາກຄຳເຫັນຂອງບັນດາທ່ານ ຄະນະກຳມະການ ດັ່ງກ່າວ ແລະ ຜູ້ເຂົ້າຮ່ວມກອງປະຊຸມ ຕໍ່ກັບການເຄື່ອນໄຫວຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃນໄລຍະໜຶ່ງປີຜ່ານມາສາມາດບັນລຸຕາມແຜນການທີ່ວາງໄວ້ ເຊິ່ງມີຜົນສຳເລັດໃນຫຼາຍດ້ານ ເປັນຕົ້ນແມ່ນການປະຕິບັດໜ້າທີ່ໃນດ້ານນິຕິກຳ, ດ້ານຕົກລົງບັນຫາພື້ນຖານຂອງທ້ອງຖິ່ນ ແລະ ດ້ານການຕິດຕາມກວດກາ ສາມາດຊອກໃຫ້ເຫັນດ້ານຕັ້ງໜ້າ ແລະ ຂໍ້ຄົງຄ້າງ ທີ່ເປັນຂໍ້ມູນເພື່ອສືບຕໍ່ແກ້ໄຂໃນຕໍ່ໜ້າ.

ຕອນທ້າຍກອງປະຊຸມໄດ້ຮັບຟັງການໂອ້ລົມຂອງທ່ານ ນາງ ມີນາພອນ ໄຊສົມພູ ເຊິ່ງທ່ານໄດ້ມີບາງຄຳເຫັນ ແລະ ໂອ້ລົມເພື່ອເປັນທິດທາງໃນການປະຕິບັດວຽກງານໃນຕໍ່ໜ້າຂອງ ຄຍປປ ເພີ່ມທະວີປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການເຂົ້າຮ່ວມແຕ່ຫົວທີ ໃນວຽກງານການສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ທີ່ໄດ້ກຳນົດໄວ້, ຮຽກຮ້ອງໃຫ້ບັນດາທ່ານ ສສຂ ເອົາໃຈໃສ່ເກັບກຳຂໍ້ມູນ, ຄົ້ນຄວ້າບັນຫາສຳຄັນຂອງເນື້ອໃນນິຕິກຳ, ບັນຫາທີ່ຕິດພັນກັບສິດ ແລະ ຜົນປະໂຫຍດຂອງປະຊາຊົນ ຕ້ອງໄດ້ພິຈາລະນາຢ່າງຮອບຄອບກ່ອນຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມ ເພື່ອຮັບປະກັນໃຫ້ມີຄວາມຄົບຖ້ວນ, ຈະແຈ້ງ, ຮັດກຸມ ສອດຄ່ອງກັບສະພາບຄວາມເປັນຈິງປັດຈຸບັນ ແລະ ສາມາດນຳໄປຈັດຕັ້ງປະຕິບັດໄດ້ໃນໄລຍະຍາວ; ຄະນະກຳມະການຕ້ອງໄດ້ເອົາໃຈໃສ່ເຊື່ອມຊຶມຜັນຂະຫຍາຍບັນດາແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ມະຕິກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງໃນແຕ່ລະຄັ້ງ ພ້ອມທັງມີການຈັດຕັ້ງປະເມີນຜົນຂອງການຈັດຕັ້ງປະຕິບັດ ໂດຍຖືເອົາຜົນຂອງການຕິດຕາມກວດກາເປັນບ່ອນອີງໃນການປະເມີນ; ເພີ່ມທະວີການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດຍຸຕິທຳ, ເອົາໃຈໃສ່ຕິດຕາມກວດກາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ທີ່ໄດ້ຮັບຮອງໄປແລ້ວນັ້ນ ເພື່ອເປັນຂໍ້ມູນໃຫ້ປະທານຄະນະປະຈຳສະພາປະຊາຊົນແຂວງ.

ກຳມະການຕ້ອງເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ ສສຂ ທີ່ເປັນກຳມະການ ແລະ ພະນັກງານ ທີ່ເປັນເສນາທິການຊ່ວຍວຽກໂດຍສ້າງໂອກາດ ແລະ ເງື່ອນໄຂໃຫ້ໄດ້ເຂົ້າຮ່ວມກອງປະຊຸມສຳມະນາ ພາຍໃຕ້ຫົວຂໍ້ຕ່າງໆ ທີ່ສະພາແຫ່ງຊາດ ແລະ ສພຂ ຈັດຂຶ້ນເພື່ອສ້າງເປັນພະນັກງານສືບທອດ; ປະສານງານຢ່າງກົມກຽວລະຫວ່າງກຳມະການຍຸຕິທຳ ກັບບັນດາພາກສ່ວນທີ່ກ່ຽວຂ້ອງຂອງ ສພຂ, ທີ່ໄດ້ຕົກລົງກັນແລ້ວ ໃຫ້ເປັນຮູບປະທຳຫຼາຍຂຶ້ນ.

ກ່ອນໜ້ານີ້, ໃນວັນທີ 26 ມັງກອນ ທີ່ຫ້ອງປະຊຸມ ສພຂ ອັດຕະປື, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ໄດ້ສຳເລັດກອງປະຊຸມຄົບຄະນະ ປະຈຳປີ 2022 ຂອງຕົນ ໂດຍການເປັນປະທານຂອງທ່ານ ແຫວນຄຳ ປະທຸມມະແສງ ປະທານ ຄວສຜ; ເຂົ້າຮ່ວມມີທ່ານ ນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານ ສພຂ ທັງເປັນຜູ້ຊີ້ນຳ ຄວສຜ; ມີບັນດາທ່ານຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້, ກອງປະຊຸມໄດ້ຮັບຟັງການສະຫຼຸບລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງ ຄວສຜ; ລາຍງານການຄືບໜ້າການຮ່າງມະຕິຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການສັນຍາແຮງງານ ແລະ ບາງເນື້ອໃນກ່ຽວກັບ ການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ເພື່ອສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ ໂດຍສະເພາະການພັດທະນາ ແລະ ປັບປຸງຫຼັກສູດການຮຽນ-ການສອນ ໃນຊັ້ນປະຖົມ ແລະ ເດັກກ່ອນໄວຮຽນ ແລະ ອົບຮົມຄູອາຈານໃຫ້ສອດຄ່ອງກັບພື້ນຖານໂຄງລ່າງ ແລະ ສະໜອງອຸປະກອນທີ່ຈຳເປັນ, ຍົກລະດັບຄຸນນະພາບຂອງການສຶກສາຊັ້ນມັດທະຍົມ ແລະ ການສຶກສາຫຼັງຊັ້ນມັດທະຍົມ ແລະ ວຽກງານອາຊີວະສຶກສາ ໃຫ້ມີຄຸນນະພາບສູງຂຶ້ນ, ການແກ້ໄຂບັນຫາວ່າງງານ ໂດຍການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ, ຂຶ້ນທະບຽນແຮງງານຄົນລາວ ແລະ ຕ່າງປະເທດ, ການປັບປຸງຕາໜ່າງບໍລິຫານການຈັດຫາງານຢູ່ພາຍໃນແຂວງ, ເປົ້າໝາຍປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ ໂດຍໄດ້ຈັດຕັ້ງປະຕິບັດ 8 ຕົວຊີ້ບອກ, ການພັດທະນາຊົນນະບົດ ຕິດພັນກັບວຽກງານ 3 ສ້າງ ແລະ ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາດ້ວຍຄວາມພະຍາຍາມສຸມໃສ່ຈຸດສຸມລຶບລ້າງຄວາມທຸກຍາກ ແລະ ຈັດສັນພູມລຳເນົາ, ສ້າງອາຊີບ, ທັງສູ້ຊົນປະຕິບັດຄາດໝາຍລຶບລ້າງຄວາມທຸກຍາກຕາມມາດຕະຖານເງື່ອນໄຂດຳລັດ 348/ດລ. ນອກຈາກນີ້, ຜູ້ແທນຍັງໄດ້ແລກປ່ຽນປະກອບຄຳເຫັນ ຕໍ່ຮ່າງມະຕິຂອງກອງປະຊຸມຄົບຄະນະກຳມາທິການບັນດາເຜົ່າ ປະຈຳປີ 2022.

ໃນຕອນທ້າຍ, ທ່ານ ນາງ ພອນມະນີ ໂອ້ລົມ ໄດ້ໃຫ້ທິດຊີ້ນຳ ເຊິ່ງທ່ານໄດ້ຕີລາຄາສູງຕໍ່ບົດສະຫຼຸບຜົນງານການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງ ຄວສຜ, ເຫັນວ່າໃນໄລຍະ 1 ປີຜ່ານມາ, ເຖິງວ່າປະເທດເຮົາ ກໍຄືແຂວງອັດຕະປື ຈະພົບກັບຄວາມຫຍຸ້ງຍາກຫຼາຍປະການ ເປັນຕົ້ນແມ່ນຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ບັນຫາອື່ນໆ ແຕ່ກຳມະການ ກໍມີຄວາມພະຍາຍາມສູງເຮັດສຳເລັດໜ້າທີ່ການເມືອງຂອງຕົນເປັນຢ່າງດີ ໂດຍສະເພາະແມ່ນການປະຕິບັດໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດແຜນງານ, ໂຄງການຈຸດສຸມຂອງທ້ອງຖິ່ນ ພ້ອມທັງເຂົ້າຮ່ວມ ແລະ ປະສານສົມທົບກັບກຳມະການຕ່າງໆຂອງ ສພຂ, ພະແນກການ-ອົງການ ແລະ ທ້ອງຖິ່ນ ໃນການເຄື່ອນໄຫວວຽກງານວິຊາສະເພາະຂອງຕົນມີຜົນສຳເລັດດີພໍສົມຄວນ. ພ້ອມນັ້ນ, ທ່ານໄດ້ເນັ້ນບາງບັນຫາເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານໃນຕໍ່ໜ້າມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ ເປັນຕົ້ນແມ່ນຕ້ອງເອົາໃຈໃສ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຢູ່ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ໃນການສ້າງ ແລະ ປັບປຸງນິຕິກຳການພິຈາລະນາບັນຫາສຳຄັນຂອງທ້ອງຖິ່ນ ທີ່ຕິດພັນກັບແນວທາງນະໂຍບາຍຂອງລັດ ທີ່ນອນໃນກອບລັດຖະທຳມະນູນ ແລະ ກົດໝາຍ ກຳນົດໃຫ້ຈະແຈ້ງຂຶ້ນກວ່າເກົ່າ, ໃນຖານະເປັນເສນາທິການ ໃຫ້ແກ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຂໍໃຫ້ບັນດາທ່ານກຳແໜ້ນ ແລະ ຍຶດໝັ້ນແນວທາງປ່ຽນແປງໃໝ່ຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ; ເອົາໃຈໃສ່ວຽກງານໂຄສະນາ-ສຶກສາອົບຮົມປະຊາຊົນຕາມແນວທາງຂອງພັກ, ປະຕິບັດນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ, ສ້າງ ແລະ ຮັກສາໄດ້ມູນເຊື້ອຄວາມສາມັກຄີປອງດອງພາຍໃນຊາດ; ສາມາດປະຕິບັດສິດ ແລະ ໜ້າທີ່ຂອງ ສພຂ ກໍຄືສິດ ແລະ ໜ້າທີ່ຂອງກຳມະການໃຫ້ໜັກແໜ້ນເຂັ້ມແຂງກວ່າເກົ່າ, ເພີ່ມທະວີຄວາມຮັບຜິດຊອບ ໃນການຕິດຕາມກວດກາ, ການປະຕິບັດໜ້າທີ່ຂອງຄະນະກຳມະການ ທີ່ສະພາປະຊາຊົນຂັ້ນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງໃຫ້ມີຄຸນນະພາບຂຶ້ນກວ່າເກົ່າ ໃນການຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງແກ້ໄຂບັນຫາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນບັນດາເຜົ່າ ທີ່ສະເໜີມາຍັງຄະນະກຳມະການ, ສູ້ຊົນປະຕິບັດແຜນການສ້າງຄວາມເຂັ້ມແຂງ ໃຫ້ແກ່ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ທີ່ເປັນຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ພະນັກງານ-ລັດຖະກອນ ທີ່ເປັນເສນາທິການ, ເພື່ອສ້າງຄວາມຮັບຮູ້, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດໄປລວງດຽວກັນ, ຕ້ອງສ້າງກົນໄກການມີສ່ວນຮ່ວມຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ທີ່ເປັນກຳມະການຂອງກຳມາການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ທີ່ຄວບຕຳແໜ່ງ ຢູ່ພະແນກການ-ອົງການ ແລະ ຂະແໜງການອື່ນ ໃນການເຂົ້າຮ່ວມວຽກງານຂອງກຳມະການ, ສຳລັບບັນດາທ່ານ ສສຂ ທີ່ເປັນກຳມະການ ຂອງກຳມາການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າຈຳນວນໜຶ່ງ ທີ່ຄວບຕຳແໜ່ງຢູ່ພະແນກ-ອົງການ ແລະ ຂັ້ນເມືອງຍິ່ງມີພາລະອັນໜັກໜ່ວງ ທີ່ຕ້ອງເຮັດໜ້າທີ່ໃນນາມສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ, ບັນດາທ່ານ ຍັງຕ້ອງປະຕິບັດໜ້າທີ່ສຳຄັນຂອງຕົນ ຄວບຄູ່ກັນໄປ, ເຊື່ອໝັ້ນວ່າບັນດາທ່ານມີຄວາມສາມາດພຽງພໍໃນການປະຕິບັດໜ້າທີ່ດັ່ງກ່າວ ໃນການປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມະການ, ເພີ່ມທະວີຄວາມເອົາໃຈໃສ່ໃນການປະສານສົມທົບກັບຄະນະເລຂາທິການສະພາປະຊາຊົນແຂວງ ແລະ ຂະແໜງຊ່ວຍວຽກຂອງຄະນະສະມາຊິກສະພາແຫ່ງຊາດ, ສພຂ ປັບປຸງ ແລະ ຍົກສູງຄຸນນະພາບຂອງເສນາທິການແລະແບບແຜນວິທີເຮັດວຽກຂອງກຳມາການ, ກົນໄກປະສານສົມທົບ ກັບພາກສ່ວນຕ່າງໆຂັ້ນທ້ອງຖິ່ນ ໃຫ້ຄ່ອງຕົວ;

(ນາງ ຈັນທະຈອນ ໂກພິຈິດ ແລະ ວິນັດ)






# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ພາກທີ IV**

**ການດຳເນີນທຸລະກິດກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ**

**ມາດຕາ 41 ການດຳເນີນທຸລະກິດກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ**

ການດຳເນີນທຸລະກິດກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ ແມ່ນ ການເຄື່ອນໄຫວ ຜະລິດ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ຈຳໜ່າຍ ແລະ ບໍລິການຊີເຈາະຈູດລະເບີດ.

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳກະຊວງປ້ອງກັນປະເທດ ແລະ ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງ ເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ສຳລັບການດຳເນີນທຸລະກິດ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດທາງການທະຫານ ໃຫ້ປະຕິບັດຕາມລະບຽບການ ຂອງກະຊວງປ້ອງກັນປະເທດ.

**ມາດຕາ 42 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດການລົງທຶນ;
2. ບຸກຄະລາກອນທີ່ຊຳນານງານກ່ຽວກັບວັດຖຸລະເບີດ;
3. ຜູ້ຂໍລົງທຶນມີ ປະຫວັດຈະແຈ້ງ ແລະ ທຶນທີ່ເໝາະສົມ ກັບປະເພດທຸລະກິດ;
4. ແຜນປະກອບພາຫະນະ, ກົນຈັກ, ມີສະຖານທີ່ຕັ້ງທີ່ເໝາະສົມ;
5. ເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດທີ່ ກະຊວງປ້ອງກັນປະເທດກຳນົດ.

**ມາດຕາ 43 ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ ຕ້ອງຍື່ນຄຳຮ້ອງພ້ອມດ້ວຍເອກະສານປະກອບ ຕໍ່ ກະຊວງປ້ອງກັນປະເທດ ດັ່ງນີ້:

1. ສຳເນົາ ໃບທະບຽນວິສາຫະກິດ ແລະ ໃບທະບຽນລົງທຶນ;
2. ບົດວິພາກເສດຖະກິດ-ເຕັກນິກ;
3. ເອກະສານຢັ້ງຢືນກ່ຽວກັບຖານະການເງິນ;
4. ເອກະສານກ່ຽວກັບຂໍ້ມູນຄວາມປອດໄພຂອງວັດຖຸລະເບີດທາງອຸດສາຫະກຳ;
5. ແຜນປ້ອງກັນ ແລະ ແກ້ໄຂອຸບປະຕິເຫດ;
6. ເອກະສານອື່ນ ຕາມການກຳນົດຂອງກະຊວງປ້ອງກັນປະເທດ.

**ມາດຕາ 44 ການອະນຸຍາດດຳເນີນທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ**

ພາຍຫຼັງໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບແລ້ວ ກະຊວງປ້ອງກັນປະເທດ ຕ້ອງພິຈາລະນາອະນຸ ຍາດດຳເນີນທຸລະກິດ ພາຍໃນເວລາ 45 ວັນ ນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ. ໃນກໍລະນີບໍ່ເຫັນດີ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພ້ອມດ້ວຍເຫດຜົນ ພາຍໃນເວລາດັ່ງກ່າວ.

ອ່ານຕໍ່ສະບັບໜ້າ...




## ວິທີເຮັດວຽກ

ບັດນີ້ຕ້ອງເວົ້າໃຫ້ຄັກເຖິງບັນຫານັກຮຽນຮູ້.

ບັນດານັກຮຽນຮູ້ທີ່ເຂົ້າຮ່ວມວຽກການປະຕິວັດ ແລະ ເຂົ້າຮ່ວມໃນການຕໍ່ສູ້ນັ້ນ ແມ່ນເປັນຂອງປະເສີດໃຫ້ແກ່ພັກຫຼາຍທີ່ສຸດ.

ຖ້າບໍ່ມີນັກຮຽນຮູ້ເຫຼົ່ານັ້ນ ວຽກການປະຕິວັດກໍພົບຄວາມຫຍຸ້ງຍາກຫຼາຍ.

ແຕ່ວ່າ ຍັງມີນັກຮຽນຮູ້ບາງຄົນ ເຫັນວ່າຕົນເປັນຂອງປະເສີດແນວນັ້ນ ກໍອວດອົ່ງທະນົງຕົວ, ອອກໜ້າອອກຕາຍົກຍໍຕົວ, ການອວດອົ່ງທະນົງຕົວ ແລະ ອອກໜ້າອອກຕາຍົກຍໍຕົວ ດັ່ງນັ້ນເປັນການເສຍຫາຍໃຫ້ແກ່ຕົວຂອງເຂົາເອງ.

ມັນກີດຂວາງຄວາມກ້າວໜ້າຂອງຕົວເຂົາເອງ.

ນັກຮຽນຮູ້ແມ່ນຫຍັງແທ້?

ນັກຮຽນຮູ້ແມ່ນຜູ້ຮູ້, ຜູ້ເຂົ້າໃຈ, ໃນໂລກນີ້ ມີການຮູ້ພຽງແຕ່ສອງຊະນິດຄື: ຊະນິດທີ່ໜຶ່ງ ແມ່ນຮູ້ການຕໍ່ສູ້ ເພື່ອດຳລົງຊີວິດ, ທຳມະຊາດວິທະຍາສາດ ແມ່ນເກີດມານຳການຮູ້ຊະນິດນີ້, ຊະນິດທີສອງ ແມ່ນຮູ້ການຕໍ່ສູ້ຂອງຊາດ ແລະ ຂອງສັງຄົມ, ວິທະຍາສາດສັງຄົມ, ແມ່ນເກີດມາຈາກການຮູ້ຊະນິດນີ້. ນອກຈາກສອງຢ່າງນີ້ ແມ່ນບໍ່ມີນັກຮຽນຮູ້ອື່ນໃດອີກ.

ຄົນຜູ້ໜຶ່ງ ຮຽນສຳເລັດຈາກມະຫາວິທະຍາໄລ ກໍອາດເອີ້ນວ່າແມ່ນນັກຮຽນຮູ້, ແຕ່ເຂົາຍັງບໍ່ທັນຮູ້ຈັກໄຖນາ, ບໍ່ທັນຮູ້ນຈັກເຮັດວຽກງານໜັກ, ບໍ່ທັນຮູ້ຈັກຮົບເສິກ, ບໍ່ທັນຮູ້ຈັກເຮັດວຽກງານອື່ນຫຼາຍຢ່າງ ລວມຄວາມແລ້ວ, ວຽກງານຕົວຈິງເຂົາຍັງບໍ່ທັນຮູ້ຈັກຫຍັງໝົດ, ດັ່ງນັ້ນ ກໍໝາຍຄວາມວ່າ ເຂົາຫາກໍເປັນນັກຮຽນຮູ້ພຽງແຕເຄິ່ງດຽວ ຄວາມຮູ້ຂອງເຂົາຍັງແມ່ນຄວາມຮູ້ຮຽນນຳປຶ້ມ ຍັງບໍ່ທັນແມ່ນຄວາມຮູ້ອັນຄົບຖ້ວນ. ຖ້າເຂົາຢາກເປັນນັກຮຽນຮູ້ຄົບຖ້ວນ ກໍຕ້ອງເອົາຄວາມຮູ້ຂອງເຂົານັ້ນ ໄປປະຕິບັດເຂົ້າໃນວຽກງານຕົວຈິງເສຍກ່ອນ, ດັ່ງນັ້ນ, ນັກຮຽນຮູ້ເຫຼົ່ານັ້ນ ຈຳເປັນຕ້ອງຮູ້ແຈ້ງຂໍ້ບົກພ່ອງຂອງຕົນ ຕ້ອງຖະໜອມຕົວ, ຕ້ອງບໍ່ອວດອົ່ງສະຫາວ, ຕ້ອງອອກແຮງເຮັດວຽກການຕົວຈິງທຸກຢ່າງ.

ທິດສະດີ ຕ້ອງນຳອອກປະຕິບັດ, ການປະຕິບັດຕ້ອງແນໃສ່ເຮັດໃຫ້ຖືກຕາມທິດສະດີ

ທິດສະດີ ຄືກັນກັບລູກໜ້າ ຫຼື ລູກປືນ ການປະຕິວັດຄືເປົ້າໝາຍທີ່ຈະຍິງໃສ່, ມີລູກໜ້າແລ້ວບໍ່ຍິງ ຫຼື ຍິງໂລງເລງ ກໍ່ຄືກັບບໍ່ມີລູກໜ້າ.

ທິດສະດີ ແມ່ນເພື່ອນຳອອກໃຊ້ໃນວຽກການຕົວຈິງ, ພຽງແຕ່ຂຽນຂຶ້ນໃຈໄດ້ກັບປາກ ສຳລັບເອົາໄປອວດອ້າງຄົນອື່ນນັ້ນ, ມັນເປັນທິດສະດີທີ່ບໍ່ເປັນປະໂຫຍດ. ເພາະສະນັ້ນ ພວກເຮົາຕ້ອງອົດທົນຮ່ຳຮຽນ, ຮຽນໄດ້ແລ້ວຕ້ອງປະຕິບັດໄປພ້ອມກັນ.

ອ່ານຕໍ່ສະບັບໜ້າ...

## ມອບຫຼຽນ...

(ຕໍ່ຈາກໜ້າ 1)

(ສພຊ) ໃນຕອນບ່າຍຂອງວັນທີ 1 ກຸມພາ 2023 ທີ່ສະພາແຫ່ງຊາດ ຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ໄດ້ຈັດພິທີມອບຫຼຽນກາທີ່ລະນຶກ ວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຄົບຮອບ 65 ປີ (ວັນທີ 14 ເມສາ 1955-14 ເມສາ 2020) ໃຫ້ການນຳຂັ້ນສູງ ແລະ ຊາວໜຸ່ມປະຊາຊົນປະຕິວັດລາວສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ມີບັນດາການນຳ, ອະດີດການນຳສະພາແຫ່ງຊາດ, ສະຫາຍ ມອນໄຊ ລາວມົວຊົ່ງ ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະບັນດາສະມາຊິກຊາວໜຸ່ມພາຍໃນສະພາແຫ່ງຊາດ.

ໃນພິທີ, ຜູ້ເຂົ້າຮ່ວມ ໄດ້ຮັບຟັງການກ່າວຈຸດປະສົງພິທີມອບຫຼຽນກາລະນຶກ 65 ປີ; ຜ່ານຂໍ້ຕົກລົງຂອງຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ວ່າດ້ວຍການມອບຫຼຽນກາລະນຶກ 65 ປີ ໃຫ້ການນຳຂັ້ນສູງສະພາແຫ່ງຊາດ, ອະດີດການນຳອາວຸໂສ ແລະ ສະມາຊິກຊາວໜຸ່ມພາຍໃນສະພາແຫ່ງຊາດ ທີ່ມີຜົນງານພົ້ນເດັ່ນ ໃນການຈັດຕັ້ງປະຕິບັດວຽກງານຊາວໜຸ່ມໃນໄລຍະຜ່ານມາ. ມອບຫຼຽນຊາວໜຸ່ມຕະລຸມບອນ ແລະ ຫຼຽນກາລະນຶກ ໃຫ້ການນຳຂັ້ນສູງ, ບັນດາສະຫາຍຮອງປະທານກຳມາທິການ, ຮອງເລຂາທິການສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຄະນະບໍລິຫານງານຊາວໜຸ່ມ, ບັນດາເລຂາໜ່ວຍຊາວໜຸ່ມ ແລະ ສະມາຊິກຊາວໜຸ່ມສະພາແຫ່ງຊາດ ເຊິ່ງມອບຫຼຽນກາຕະລຸມບອນຊາວໜຸ່ມ ແລະ ຫຼຽນກາລະນຶກວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ 65 ປີ ໃຫ້ແກ່ການນຳຂັ້ນສູງສະພາແຫ່ງຊາດຄື: ສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ສະຫາຍ ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ສະຫາຍຄຳໃບ ດຳລັດຮອງປະທານສະພາແຫ່ງຊາດ, ສະຫາຍ ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະຫາຍ ບຸນຕາ ເທບພະວົງ ຮອງປະທານກຳມາທິການແຜນການ ການເງິນ ແລະ ການກວດສອບ, ສະຫາຍ ບຸນປອນ ບຸດຕະນະວົງ ອະດີດຮອງປະທານສະພາແຫ່ງຊາດ ແລະ ມອບຫຼຽນກາລະນຶກ 65 ປີ ຂອງຊາວໜຸ່ມ ໃຫ້ສະມາຊິກຊາວໜຸ່ມສະພາແຫ່ງຊາດ ລວມທັງໝົດ 165 ສະຫາຍ.

(ສອນສັກ ວັນວິໄຊ)




# ການເຕືອນສະຕິ

# ດົ້ນກົບເມກ

ສະໄໝກ່ອນ ການໃຊ້ເງິນນັບຄ່າເປັນສະຫຼຶງເປັນບາດ ເວລາຄົນບູຮານຈະສອນໃຫ້ຈື່ຈຳເປັນບົດຮຽນຊີວິດ ເພິ່ນມັກຈະເວົ້າແຈ້ງປຽບທຽບເປັນປິດສະໜາແນ່ ຫຼື ເວົ້າແຈ້ງໂລດ ແຕ່ກໍໄດ້ຄິດທົບທວນໃຫ້ເຂົ້າໃຈຖ່ອງແທ້ ເພື່ອນຳເອົາມາເປັນບົດຮຽນຊ່ວຍເຕືອນຕົວເອງໃນການດຳເນີນຊີວິດ ບໍ່ໃຫ້ຫຼົງຕົວ ຫຼື ເຫີໄປຕາມຫາຂອງໃໝ່ ເຖິງແມ່ນມີລາຄາສູງກວ່າ ແຕ່ກໍສ່ຽງທີ່ຈະຄວ້ານໍ້າເຫຼວ...

ສິບສະຫຼຶງຢູ່ຝາກນໍ້າ ຢ່າໂອ້ອ່າວຄະນຶງຫາ ໝາຍຄວາມວ່າ ຂອງທີ່ຢູ່ໄກ ສ່ຽງຕໍ່ການລົ້ມເຫຼວ ຫຼື ເສຍເວລາລົງທຶນທັງຂາດຄວາມພ້ອມ, ຂາດອຸປະກອນທີ່ຈະສຳເລັດ ມັນຈຶ່ງມີຄວາມສ່ຽງສູງ ແຕ່ສອງສະຫຼຶງມາມື ໃຫ້ຄ່ອຍກຳເອົາໄວ້ ໝາຍຄວາມວ່າ ຂອງທີ່ຢູ່ໃກ້ເປັນໃນກຳມື, ຢູ່ໃນຄວາມສາມາດທີ່ຈະເຮັດໄດ້ຄວນລົງມືເຮັດ ເຖິງແມ່ນມີລາຄາບໍ່ສູງ ແຕ່ກໍມີຄ່າເພີ່ມຂຶ້ນໄດ້. ຖ້າວ່າຄົນຜູ້ມີສອງສະຫຼຶງນັ້ນ ຫາກສະຫຼາດລົງທຶນ, ນຳໃຊ້ຊັບພະຍາກອນທີ່ຕົນມີຢູ່ແລ້ວ ເຊິ່ງບາງຄັ້ງປຽບໄດ້ກັບ ຊັບພະຍາກອນວັດທະນະທຳທີ່ເຮົາມີຢູ່ແລ້ວກໍສາມາດເພີ່ມພູນ, ຕໍ່ຍອດໃຫ້ຂະຫຍາຍກ້າວໜ້າພ້ອມທັງເຊີດຊູໃຫ້ພົ້ນເດັ່ນໄດ້.

ການຕໍ່ຍອດ, ເພີ່ມພູນ ຫຼື ເຊີດຊູຂອງເກົ່າທີ່ມີຄ່າຢູ່ແລ້ວ ມັນສະແດງເຖິງສະຕິປັນຍາຂອງຄົນທີ່ບໍ່ຫຼົງຕົວເອງ-ບໍ່ຫຼົງກະແສ, ບໍ່ຫຼົງໃນລາບຍົດວາດສະໜາຊົ່ວຄາວ ເຊິ່ງມັນຄ້ອງຈອງກັບພາສິດທີ່ວ່າ: ເຫັນວ່າມີເຮືອແລ້ວ ຢ່າລືມແພຟາກໄມ້ໄຜ່ ເຫັນວ່າເປັນໃຫຍ່ແລ້ວ ຢ່າລືມສິ້ນທີ່ມາ..., ສຸພາສິດນີ້ບອກວ່າ: ເວລາໄດ້ດີຂຶ້ນສູ່ທີ່ສູງ ກໍຢ່າຫຼົງລືມທີ່ມາຕໍ່າຕ້ອຍ....

ສັງລວມໄດ້ວ່າ: ພາສິດຂ້າງເທິງນັ້ນ ຊ່ວຍເຕືອນຄົນໃຫ້ມີສະຕິຮູ້ເທົ່າທັນໂລກ; ຮູ້ເທົ່າທັນຄາລົມຄົນ ເພາະວ່າຊື່ວ່າແນວຄວາມເວົ້າຂອງຄົນມັນເກີນງ່າຍໄດ້ທັງຫງາຍ ແລະ ຂວ້ຳຄວາມເວົ້າບໍ່ຢູ່ຄວາມ; ພາສິດນີ້ ສອນໃຫ້ຄົນເຮົາເຮັດແທ້ທຳຈິງບໍ່ເວົ້າປີ້ນໄປມາໂລເລ.

ສະເໜີຂໍແລກປ່ຽນ.



# ອັນຕະລາຍຈາກພຼາສະຕິກອ່ອນ

# ໂດຍ: ສາວແອ່ນ




ໃນຖົງຢາງພຼາສະຕິກອ່ອນທຸກຊະນິດ ທີ່ໃຊ້ຫໍ່ຫຸ້ມອາຫານ, ບັດເອທີເອັມ, ຜ້າມ່ານໃນຫ້ອງນໍ້າ ແລະອື່ນໆ ມີສານເຄມີທີ່ເອີ້ນວ່າ: ພາທາເລດ (phthalate) ທີ່ຊ່ວຍເພີ່ມຄວາມອ່ອນຂອງວັດຖຸ ເຊິ່ງຖ້າໄດ້ຮັບສານນີ້ເຂົ້າໄປຫຼາຍ ຈະເຮັດໃຫ້ມີຄວາມສ່ຽງຕໍ່ຄວາມດັນເລືອດສູງ ໂດຍໄດ້ຮັບການຢືນຢັນການຄົ້ນຄວ້າຈາກສະຖາບັນ Pediatrics ເຊິ່ງໄດ້ເກັບຜົນການທົດສອບຈາກກຸ່ມຕົວຢ່າງຈາກເດັກນ້ອຍອາຍຸ 6-19 ປີ ແລະ ພົບວ່າ ເດັກນ້ອຍທີ່ໄດ້ຮັບສານເຄມີພາທາເລດ ຈະມີຄວາມດັນເລືອດສູງກວ່າເດັກນ້ອຍທີ່ບໍ່ໄດ້ຮັບສານເຄມີນີ້.

ຟັງເບິ່ງຄືວ່າບໍ່ອັນຕະລາຍຫຼາຍ ແຕ່ຕົວຈິງແລ້ວມັນເປັນອັນຕະລາຍໃນໄລຍະຍາວ ສານເຄມີນີ້ ເຮັດໃຫ້ຮ່າງກາຍເກີດພາວະຄວາມຕຶງຄຽດອັອກຊີເດຊັ່ນ (oxidative stress) ນັ້ນກໍຄືການທີ່ຈຸລັງຖືກສານອະນຸມູນອິດສະຫລະທຳລາຍ ມັນເປັນສາເຫດແຫ່ງພະຍາດຄວາມເສື່ອມຊຳເຮື້ອຫຼາຍກວ່າ 70 ຊະນິດ ເຊິ່ງລ້ວນເປັນພື້ນຖານຂອງການເກີດພະຍາດເສັ້ນເລືອດຫົວໃຈ, ມະເຮັງ, ເສັ້ນເລືອດຕີບ, ຄໍ່ອັກເສບ ແລະ ການແຂງຕົວຂອງເນື້ອເຍື່ອແດງ. ພະຍາດຄວາມຈຳເສື່ອມ ແລະ ການເສື່ອມສະພາບສະເພາະ.

ນອກນັ້ນ, ພາທາເລດທີ່ຢູ່ໃນພລາສະຕິກຫໍ່ອາຫານ ຍັງຂັດຂວາງການເຮັດວຽກຂອງຕ່ອມຕ່າງໆໃນຮ່າງກາຍ ໂດຍສະເພາະຜູ້ທີ່ມີບັນຫາໂມເລກຸນຕໍ່າໃນເລືອດຢູ່ແລ້ວເຊິ່ງຈະພາໃຫ້ເກີດຄວາມຜິດປົກກະຕິຂອງຮໍໂມນ ແລະ ເພີ່ມການເຕີບໂຕຂອງເດັກຍິງ ເຮັດໃຫ້ເຕີບໃຫຍ່ເກີນອາຍຸ ແລະ ຍັງມີສ່ວນເຮັດໃຫ້ເກີດພະຍາດເບົາຫວານ, ສະມາທິສັ້ນ, ພູມແພ້ ແລະ ຫອບຫືດ.

ດັ່ງນັ້ນ, ຖ້າສາມາດຫຼີກເວັ້ນຈາກສານເຄມີນີ້ຈະເປັນການດີທີ່ສຸດ ໂດຍຫຼີກລ່ຽງການກິນອາຫານສຳເລັດຮູບ ຫລື ອາຫານທີ່ບັນຈຸ ຫລື ຫໍ່ຫຸ້ມດ້ວຍພລາສະຕິກ ແລະ ສຳຄັນທີ່ສຸດບໍ່ຄວນຫໍ່ອາຫານທີ່ຫໍ່ພຼາສະຕິກ ແລ້ວນຳເຂົ້າໃນໄມໂຄເວັບ ຄວນຫັນມາເກັບຮັກສາອາຫານໃສ່ໃນໂຖແກ້ວຈະດີກວ່າ ເສຍສະຫຼະຄວາມສະດວກສະບາຍເລັກນ້ອຍ ເພື່ອປ້ອງກັນພະຍາດ ແລະ ເພື່ອສຸຂະພາບທີ່ດີ.

www.sanook.com




## ຈາຕຸກະລະບີ

ຈາຕຸກະລະບີ ແມ່ນວຽກທີ່ຄວນເຮັດ 4 ຢ່າງ ຂອງລະບອບພະລາຊາ ຫລື ສົມບູນລະນາຍາສິດທິລາດ ຄື:

1. ຕັດສິນຄວາມໃນເມືອງ.
2. ສົ່ງເສີມໃຫ້ລາສະດອນຢູ່ເຢັນເປັນສຸກ
3. ຊອກຫາພົນປະໂຫຍດໃຫ້ບ້ານເມືອງ
4. ປ້ອງກັນປະເທດໃຫ້ໝັ້ນຄົງເຊັ່ນ: ເສນາຄະນິກອນ

ພາລາຊາຄຸ້ມຄອງກອງທັບ ດ້ານພາກສ່ວນແຫ່ງກອງທັບພະລາຊາສະໄໝບູຮານມີ 4 ພາກສ່ວນຄື ກອງທັບຊ້າງ, ກອງທັບມ້າ, ກອງທັບລົດ ແລະ ກອງທັບທະຫານບົກ ປທະຫານເດີນທາງດິນ) ຍັງມີເສນາຄື ຜູ້ນຳທັບໂດຍແມ່ນພະລາຊານັ້ນເອງ

ຈາຕຸກະລະບີ ແມ່ນພາສາບາລີ.



## ຂຽນຄຳລາວໃຫ້ຖືກ

# ຄູແສງ

| ອັກສອນສູງ | ອັກສອນຕ່ຳ |
|---|---|
| ຂ່າ : ຫົວຂ່າ | ຄ່າ : ລູບຄ່າ |
| ຂູ່ : ຂົ່ມຂູ່ | ຄູ່ : ຍາຄູ່ |
| ໄຂ່ : ໄຂ່ໄກ່ | ໄຄ່ : ອັກໄຄ່ |
| ຂ່າງ : ໝາກຂ່າງ | ຄ່າງ : ໂຕຄ່າງ |
| ສ່ຽວ : ສ່ຽວສະຫາຍ | ຊ່ຽວ : ຊ່ຽວຊານ |
| ສ່າ : ສ່າເຫຼົ້າ | ຊ່າ : ຊ່າລື |
| ສື່: ສື່ສານ | ຊື່ : ຊື່ສຽງ |
| ສໍ່ : ສັບສໍ່ | ຊໍ່ : ຊໍ່ດອກໄມ້ |



## ສຸກສະບາຍຫາຍໂຣຄາ

# ອັອບຟິດ ຊິນໂດຣມ (Office syndrome)

ແປ ແລະ ຮຽບຮຽງໂດຍ: ທິວາກະທິ




ອັອບຟິດຊິນໂດມ ຫຼື ກຸ່ມອາການປວດກ້າມຊີ້ນແລະເຍື່ອຫຸ້ມກ້າມຊີ້ນ (Myofascial pain syndrome) ຄືອາການທີ່ມາຈາກຮູບແບບຂອງການເຮັດວຽກຂອງກ້າມຊີ້ນບ່ອນເກົ່າແບບຊ້ຳໆ ເປັນເວລາດົນແບບຕໍ່ເນື່ອງ ເຊັ່ນ: ການນັ່ງເຮັດວຽກໜ້າຄອມພິວເຕີດົນເກີນໄປ ໂດຍບໍ່ເຄື່ອນໄຫວໄປ-ມາ ເພື່ອຜ່ອນຄາຍ ຫຼື ປັບປ່ຽນອາລິຍະບົດ ເຊິ່ງອາດຈະແຜ່ລາມຈົນກາຍເປັນອາການປວດຊ້ຳເຮື້ອ ລວມໄປເຖິງອາການມຶນທີ່ບໍລິເວນແຂນ ຫຼື ມີຈາກການທີ່ເສັ້ນປະສາດສ່ວນປາຍຖືກກົດທັບຢ່າງຕໍ່ເນື່ອງ.

ອັອບຟິດຊິນໂດມ ຈະມີອາການປວດເມື່ອຍກ້າມເນື້ອສະເພາະສ່ວນໃດສ່ວນໜຶ່ງຂອງຮ່າງກາຍ ເຊັ່ນ: ຄໍ ແລະ ບ່າ ມັກມີອາການປວດເມື່ອຍເປັນບໍລິເວນກວ້າງ ບໍ່ສາມາດລະບຸຕຳແໜ່ງໄດ້ຢ່າງຊັດເຈນ ແລະ ອາດມີອາການເຈັບບໍລິເວນໃກ້ຄຽງຮ່ວມນຳ ເຊິ່ງອາດຈະມີລັກສະນະປວດເມື່ອຍແຕ່ເລັກນ້ອຍຈົນເຮັດໃຫ້ຮູ້ສຶກລຳຄານ ເຖິງຂັ້ນຮຸນແຮງຈົນທໍລະມານ ແລະ ຈະມີອາການຂອງລະບົບປະສາດຮ່ວມນຳເຊັ່ນ: ມຶນຊາ, ເປັນວິນ, ຂົນລຸກ ແລະ ເຫື່ອອອກຕາມບໍລິເວນທີ່ປວດເມື່ອຍ ຖ້າເປັນບໍລິເວນຄໍອາດມີອາການມຶນງົງ, ຫູອື້, ຕາພາງ ແລະ ອາການທາງລະບົບປະສາດທີ່ຖືກກົດທັບ ເຊັ່ນ: ອາການມຶນຊາບໍລິເວນແຂນ ແລະ ຂາ ລວມເຖິງອາການອ່ອນແຮງ ຖ້າມີການກົດທັບເສັ້ນປະສາດເປັນເວລາດົນນານ.

ສຳລັບການຮັກສາແມ່ນຄວນໄດ້ຮັບການຮັກສາຈາກແພດຜູ້ຊ່ຽວຊານດ້ານອາການປວດກ້າມຊີ້ນສະເພາະ ໂດຍແພດຈະພິຈາລະນາການຮັກສາທີ່ເໝາະສົມຂອງແຕ່ລະບຸກຄົນ ເຊັ່ນ: ການຍືດກ້າມຊີ້ນທີ່ຖືກວິທີດ້ວຍໂຕເອງ, ການຮັກສາດ້ວຍວິທີກາຍະພາບບຳບັດ, ການນວດເພື່ອຜ່ອນຄາຍ, ການຝັງເຂັມ ແລະ ການກິນຢາ.

**ວິທີການປ້ອງກັນມີຄື:**

1. ຕ້ອງອອກກຳລັງກາຍດ້ວຍທ່າທີ່ເໝາະສົມກັບອາການ ເຊັ່ນ: ການຍືດກ້າມຊີ້ນໃຫ້ມີຄວາມຜ່ອນຄາຍ, ການອອກກຳລັງກາຍ ເພື່ອເສີມສ້າງຄວາມແຂງແຮງຂອງກ້າມຊີ້ນ ໂດຍອາໄສຄວາມໃສ່ໃຈ ແລະ ຄວາມສະໝ່ຳສະເໝີ.

2. ປັບສະພາບແວດລ້ອມໃນການເຮັດວຽກເຊັ່ນ: ປັບລະດັບຄວາມສູງຂອງໂຕະ ແລະ ຕັ່ງ ໃຫ້ສາມາດນັ່ງໃນທ່າທີ່ສະບາຍ ແລະ ປັບໜ້າຈໍຄອມພິວເຕີໃຫ້ຢູ່ໃນລະດັບທີ່ພໍດີສາຍຕາ.

3. ປັບພຶດຕິກຳການໃຊ້ວຽກກ້າມຊີ້ນທີ່ເໝາະສົມ ເຊັ່ນ: ໃນເວລາເຮັດວຽກຄວນມີການຍືດເສັ້ນຍືດສາຍ ຫລື ປ່ຽນອາລິຍະບົດ ເພື່ອຜ່ອນຄາຍກ້າມຊີ້ນຢ່າງໜ້ອຍທຸກໆ 1 ຊົ່ວໂມງ.

**www.siphhospital.**

## ອາດ ກະວີລາວ

# ໂລກແຫ່ງຄວາມຈິງ

**# ໂດຍ: ໂອທອງ ຄຳອິນຊູ**

✻ ຄວາມຝັນ ບາງເທື່ອນັ້ນ
ທິດສະດີບາງອັນ
ວິຊາການຮຽນຮູ້
ເຮັດຕົວຈິງຍາກຫຍຸ້ງ
ມັນອາດແສນສູງ
ອາດງາມປານແຕ້ມ
ຄືຄະເນແນບອກ
ປານໄຈ້ເງື່ອນໄໝ

✻ ເພາະມີຫຼາຍສິ່ງໄດ້
ບາງສິ່ງຕຳລາລືມ
ບາງຖິ່ນ ດິນລົມນ້ຳ
ມີຫຼາຍແນວແມ່ນຕ້ອງ
ແປງປ່ຽນຕາມການ
ຂີດຂຽນເອົາໄວ້
ອຸນຫະພູມພາຕ່າງ
ຮຽນຮູ້ພາກສະໜາມ

✻ ເຖິງວ່າ ຮຽນຮອດຂັ້ນ
ຫາກອ່ານພຽງຕຳລາ
ບາງເທື່ອເສຍເຊີງໃຫ້
ຜູ້ທີ່ ເຄີຍຄ່ອງຄຸ້ນ
ປ.ເອກອັນສະແຫວງ
ເຊື່ອຕາມເຕັມຮ້ອຍ
ລຸງຮຽນ ປ. ສີ່
ຊິນສູ້ແດດຝົນ

✻ ເພາະວ່າ ພຽງແຕ່ຮູ້
ມັນບໍ່ທັນພຽງພໍ
ປະສົບການຄືປຶ້ມ
ເປັນສິ່ງຊູຊ່ອຍໃຫ້
ຕາມສູດຮຽນມາ
ເພື່ອການນຳໃຊ້
ຕຳລາຫົວໃຫຍ່
ເຮົາຮູ້ເພີ່ມເຕີມ

✻ ຕອນຮຽນພຽງແຕ່ໃຊ້
ໃນໂລກຂອງຄວາມຈິງ
ການລົງມືເຮົາໃຊ້
ຄວາມຊຳນານຮອບຮູ້
ການຈື່ຈຳເອົາ
ບໍ່ເປັນແນວນັ້ນ
ປັນຍາປະສົມເຫື່ອ
ພາໃຫ້ເກີດຜົນ ແທ້ແລ້ວ!



## ຫົກຫາຍ ລະບາຍ

### (ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

**# ສາວຈົ້ມ**

✻ **ແຈ້ງ**ການເລກທີ **152/ທສບຍ**, ລົງວັນທີ **3 ກຸມພາ 2023** ຕາມເບື້ອໃນບົ່ງແຈ້ງ ຄະແຫຼງກ່ຽວກັບບັນຫາສຸມໃສ່ປະຕິບັດ ເລັ່ງກຽມຄວາມພ້ອມ ອຳນວຍຄວາມສະດວກໃຫ້ **ການລົງທຶນຂຽກທ່ອງທ່ຽວ** ບໍລິການຊຸກຍູ້ ອຳນວຍໃຫ້ໄລ່ງລ່ຽນໄຫລ ຈຸດປະສົງເພື່ອໃຫ້ ແກ້ໄຂເລື່ອງເສດຖະກິດ ພັດທະນາຕາມແຜນ ຫລີກໄພເງິນເຟີ້ ຫລາຍເຂດແຂວງສຸມເລື້ອງ ພັດທະນາແຫຼ່ງທ່ອງທ່ຽວ ໃກ້ແລະໄກ-ບອກແລະໃນຊຸກຍູ້ ອຳນວຍພ້ອມພໍ່ກັບ **ຄັກແລ້ວ!**

✻ **ຫຼາຍ**ອາທິດຜ່ານມາ ເຫັນວ່າສະພາບອາກາດ ແລະ ອັດຕາຄ່າແລກປ່ຽນ ລະຫວ່າງກີບແລກບາດ ສອບທາງກັບທຸກອັນ ເພາະອາກາດນັ້ນ ບັນນີ້ເຢັນລົງ ກົງກັນຂ້າມກັບຄ່າແລກປ່ຽນ ທີ່ເພີ່ມຂຶ້ນປານຕິດປີກ ເຫັນໄດ້ວ່າ ຜົນຕາມມາຄືລາຄາສິນຄ້າຕາມຫ້ອງຕະຫລາດ ເໝັງຕົງແຮງປານຖືກລົມພາຍຸພາດ ແລະ ໄຂວ່ເຂວຕາມຈັງຫວະຂອງແລວອາໃຍ ຫຼາຍຢ່າງເສັງຊ່ອງຂຶ້ນ ແປປ່ຽນຕາມການ ຍ້ອນຜະລິດຕະພັນ ທີ່ເຮົາຊົມໃຊ້ ກ່າບົດໃນຂາເຂົ້າ ບ່າເອົາຈາກເພີ່ນ ແມ່ຄ້າເລີຍກ່າວເອີ້ນ ຍ້ອນເງິນຂຶ້ນຄ່າຈຶ່ງແພງ **ອ່າຊັ້ນ!**

## ຊອບຍິ້ມ

**# ແອ່ນຕຸ້ງ**



**ເລື່ອງ: ຄຳຖາມເປັນເຫດ**

ມື້ໜຶ່ງເອື້ອຍຖູຖາມຫ້າວກິວ່າ
+ ອາບນີ້ເລີ່ມຕົ້ນດ້ອຍໂຕຫຍັງ?
- ເລີ່ມຕົ້ນດ້ອຍໂຕ ອ
+ ຜິດ! ອາບນີ້ເລີ່ມຕົ້ນດ້ອຍໂຕ ອ ຊັ້ນຕ່ວ່າ
- ຜິດຈັ່ງໃດ ອາບນີ້ອັບອາທິດ
+ ?!?!

## ຄະຕິເຕືອນໃຈ

**# ດອກສະຍອມ**

ຈົ່ງສຶກສາເອົາຈຸດດີຂອງຄົນອື່ນ
ເພື່ອພັດທະນາຈຸດອ່ອນຂອງຕົນເອງ




# ຫ່າ–ຮ່າ

"ຮ່າ" ແລະ "ຫ່າ" ສອງຄຳນີ້ເປັນຄຳພ້ອມສຽງ ຄືມີສຽງຄືກັນ (ຍົກເວັ້ນສຽງສຳນຽງທ້ອງຖິ່ນຊຽງຂວາງ) ແຕ່ຄວາມໝາຍຕ່າງກັນດັ່ງນີ້:

"ຫ່າ" ເປັນຄຳນາມ ມີຄວາມໝາຍວ່າ "ເທື່ອ, ຄັ້ງ, ຈຳນວນຝົນຕົກເທື່ອໜຶ່ງໆ". ນ້ຳທີ່ຕົກລົງມາຈາກຟ້າ ເອີ້ນວ່າ "ຫ່າຝົນ", ລັກສະນະນາມຮຽກຝົນຕົກລົງມາເທື່ອໜຶ່ງ ເຊັ່ນ

- ມື້ວານນີ້ຝົນຕົກລົງມາຫ່າໃຫຍ່.
- ທາງໂຫລາສາດພະຍາກອນວ່າ ປີນີ້ພະເສົາຈະບັນດານໃຫ້ຝົນຕົກ 400 ຫ່າ.

ສ່ວນຄຳວ່າ "ຮ່າ" ມີ 2 ປະເພດຄຳ ຄື ຄຳນາມ ແລະ ຄຳກິລິຍາ:

"ຮ່າ" ທີ່ເປັນຄຳນາມ ມີຄວາມໝາຍວ່າ "ຜີຈຳນວນໜຶ່ງ ເຊິ່ງເຮັດໃຫ້ຄົນແລະສັດລົ້ມຕາຍລົງເປັນອັນມາກ ໄດ້ແກ່ ໂລກອະຫິວາ ແລະ ກາລະໂລກ ເປັນຕົ້ນ" ບູຮານເອີ້ນວ່າ ໂລກຮ່າ ຫຼື ຜີຮ່າກິນຄົນແລະສັດ. ຄຳວ່າ "ຮ່າ" ທີ່ເປັນຄຳນາມນີ້ ມັກຈະໃຊ້ເປັນຄຳດ່າ ເຊັ່ນ ຮ່າກິນຫົວມັນ! ບັກຮ່າຮົດມັນນີ່!

"ຮ່າ" ທີ່ເປັນຄຳກິລິຍາ ມີຄວາມໝາຍວ່າ "ພົ່ນ" ຫຼື ເປົ່າລົມອອກຈາກປາກໂດຍໃຫ້ປາກອ້າກວ້າງ ແລ້ວທົ່ງລົມອອກຈາກຮູຄໍ ເອີ້ນວ່າ "ຮ່າລົມ" ເຊັ່ນ

- ເວລາເຮົາກິນເຜັດຫຼາຍ ໃຫ້ຮ່າລົມອອກມາຫຼາຍໆເທື່ອ ຈະພາໃຫ້ເຊົາເຜັດໄວ.

ຈາກຄວາມແຕກຕ່າງທາງດ້ານຄວາມໝາຍຂອງຄຳວ່າ "ຫ່າ" ແລະ "ຮ່າ" ຄືດັ່ງທີ່ໄດ້ກ່າວມາ. ພວກເຮົາຕ້ອງໄດ້ລະວັງ ເມື່ອຂຽນ "ຫ່າຝົນ" ຢ່າໄດ້ຫຼົງຂຽນເປັນ "ຮ່າຝົນ" ເປັນອັນຂາດ ເພາະຈະເຮັດໃຫ້ຜິດຄວາມໝາຍກາຍເປັນຄຳດ່າແບບບໍ່ຮູ້ສຶກໂຕ.




# ປະທານາທິບໍດີອີຣານ ລົງນາມຄຳສັ່ງປະຕິບັດກົດໝາຍ ວ່າດ້ວຍອີຣານເຂົ້າເປັນສະມາຊິກອົງການຮ່ວມມືຊຽງໄຮ້



ໃນວັນທີ 7 ກຸມພາ 2023 ໄດ້ມີການລາຍງານຂ່າວວ່າ: ທ່ານ ອີບຣາຮີມ ຣາຍຊີ ປະທານາທິບໍດີອີຣານ ໄດ້ລົງນາມໃນຄຳສັ່ງໂດຍຮຽກຮ້ອງໃຫ້ປະຕິບັດກົດໝາຍວ່າດ້ວຍອີຣານເຂົ້າເປັນສະມາຊິກອົງການຮ່ວມມືຊຽງໄຮ້.

ໂດຍອ້າງອີງຕາມຖະແຫຼງການທີ່ລົງໃນເວັບໄຊປະທານາທິບໍດີອີຣານໃຫ້ຮູ້ວ່າ: ມື້ດຽວກັນ, ທ່ານ ອີບຣາຮີມ ຣາຍຊີ ໄດ້ມອບໝາຍໃຫ້ກະຊວງການຕ່າງປະເທດອີຣານເປັນຜູ້ປະຕິບັດກົດໝາຍວ່າດ້ວຍອີຣານ ເຂົ້າເປັນສະມາຊິກອົງການຮ່ວມມືຊຽງໄຮ້.

ຖະແຫຼງການລະບຸວ່າ: ອົງການຮ່ວມມືຊຽງໄຮ້ໄດ້ດຳເນີນການເຄື່ອນໄຫວຢ່າງຕັ້ງໜ້າໃນຫຼາຍຂົງເຂດ ເຊັ່ນ: ເສດຖະກິດ ເປັນຕົ້ນແມ່ນພາຍຫຼັງເຂົ້າເປັນສະມາຊິກ ອົງການນີ້ຢ່າງເປັນທາງການແລ້ວ, ອີຣານຈະສາມາດປົກປັກຮັກສາຜົນປະໂຫຍດຂອງຕົນຢູ່ໃນຂົງເຂດທີ່ກ່ຽວຂ້ອງຢ່າງມີປະສິດທິຜົນຫຼາຍກວ່າເກົ່າ. ນອກນີ້. ອີຣານເຂົ້າເປັນສະມາຊິກອົງການຮ່ວມມືຊຽງໄຮ້ ຈະເປັນການຊຸກຍູ້ໃຫ້ອີຣານເຂົ້າຮ່ວມຂໍ້ລິເລີ່ມ "ໜຶ່ງແລວໜຶ່ງເສັ້ນທາງ".

**ແຫຼ່ງຂ່າວ: CRI**

# ສະຫະພາບເອີຣົບ ອະນຸມັດແຜນການຊ່ວຍເຫຼືອເສດຖະກິດຕ່າງໆ



ຄະນະກຳມາທິການສະຫະພາບເອີຣົບໄດ້ອອກຖະແຫຼງການເມື່ອວັນທີ 7 ກຸມພາຜ່ານມາ ໃຫ້ຮູ້ວ່າ: ໂດຍອີງຕາມຂອບການຊ່ວຍເຫຼືອວິກິດການຊົ່ວຄາວແຫ່ງຊາດ, ຄະນະກຳມາທິການສະຫະພາບເອີຣົບໄດ້ອະນຸມັດແຜນການຊ່ວຍເຫຼືອສະໂລເວນີ ທີ່ມີມູນຄ່າ 100 ລ້ານເອີໂຣ ເພື່ອອຸດໜູນບໍລິສັດທີ່ຫຼຸດຈຳນວນພະນັກງານ ແລະ ໂມງເຮັດວຽກລົງ ຍ້ອນຄ່າໃຊ້ຈ່າຍພະລັງງານເພີ່ມສູງຂຶ້ນ.

ແຜນການດັ່ງກ່າວ ມີເປົ້າໝາຍເພື່ອຮັກສາລະດັບການປະກອບອາຊີບ ແລະ ຫຼີກເວັ້ນການຫຼຸດຈຳນວນພະນັກງານຂອງສະໂລເວນີ ເຊິ່ງຄະນະກຳມາທິການສະຫະພາບເອີຣົບໄດ້ອະນຸມັດແຜນການຫຼຸດການສິ້ນເປືອງພະລັງງານໄຟຟ້າຂອງຊູແອັດ ພາຍໃຕ້ສະພາບການປະທະກັນລະຫວ່າງຣັດເຊຍ-ອູແກຣນ, ແຜນການນີ້ຈະໃຊ້ມາດຕະການດ້ານການເງິນເພື່ອສະໜັບສະໜູນເປົ້າໝາຍການຫຼຸດຜ່ອນການສິ້ນເປືອງພະລັງງານ. ນອກນີ້, ຄະນະກຳມາທິການສະຫະພາບເອີຣົບ ຍັງໄດ້ອະນຸມັດແຜນການຄ້ຳປະກັນຊ່ວຍເຫຼືອແຝງລັງ ມີມູນຄ່າ 15 ລ້ານເອີໂຣ ເພື່ອສະໜັບສະໜູນບໍລິສັດໄຟຟ້າຢູ່ເຂດອາແລນ ໃຫ້ດຳເນີນງານເປັນປົກກະຕິ.

# ບຸນກຸດຈີນກາຍເປັນມື້ພັກລັດຖະການ ຕາມກົດໝາຍຂອງນະຄອນນິວຢອກ

ມີການລາຍງານຂ່າວໃຫ້ຮູ້ວ່າ: ກອງປະຊຸມຄົບຄະນະສະມາຊິກສະພານະຄອນນິວຢອກ ເມື່ອວັນທີ 2 ກຸມພາ 2023 (ຕາມເວລາທ້ອງຖິ່ນ) ໄດ້ຜ່ານການຮັບຮອງ "ຍັດຕິວ່າດ້ວຍບຸນປີໃໝ່ຕາມປະຕິທິນຈັນທະຄາດຈີນ (Lunar New Year)" ດ້ວຍ 49 ຄະແນນສຽງ (ມີສະມາຊິກສະພາ 2 ຄົນບໍ່ໄດ້ເຂົ້າຮ່ວມກອງປະຊຸມ).

ໝາຍຄວາມວ່າໃນຕໍ່ໜ້າ, ບຸນປີໃໝ່ຕາມປະຕິທິນຈັນທະຄາດຈີນ ຫຼື ບຸນກຸດຈີນ ຈະກາຍເປັນວັນພັກລັດຖະການຕາມກົດໝາຍຂອງນະຄອນນິວຢອກ ອາເມລິກາ ເຊິ່ງຖືວ່າເປັນເຫດການທີ່ມີຄວາມໝາຍປະຫວັດສາດ ສຳລັບຊາວອາເມລິກາເຊື້ອສາຍອາຊີຢູ່ນະຄອນນິວຢອກ.

ທ່ານ ຄຣິສໂຕເຟີ ມາດ ສະມາຊິກສະພານະຄອນນິວຢອກ ຈາກເຂດເລືອກຕັ້ງທີ 1 ຂອງເຂດມານຮັດຕັນ ເວົ້າວ່າ: ຍັດຕິດັ່ງກ່າວໄດ້ຜ່ານການຮັບຮອງ, ຈະໝາຍຄວາມວ່າໃນໄລຍະບຸນກຸດຈີນໃນອະນາຄົດນັ້ນ, ບໍ່ພຽງແຕ່ແມ່ນນັກຮຽນນັກສຶກສາໄດ້ພັກຮຽນເທົ່ານັ້ນອີກ, ພະນັກງານໃນພາກສ່ວນອຳນາດການປົກຄອງ ເຊັ່ນ: ພະນັກງານໃນສານ, ພະນັກງານໃນທະນາຄານ ແລະ ອື່ນໆ ລ້ວນແຕ່ຈະໄດ້ພັກລັດຖະການມື້ໜຶ່ງ.

ຕາມສະຖິຕິທີ່ຍັງບໍ່ຄົບຖ້ວນ, ກິດຈະກຳຕາມປະເພນີຕ່າງໆໃນໄລຍະບຸນກຸດຈີນໄດ້ເຂົ້າເຖິງເກືອບ 200 ປະເທດ ແລະ ເຂດແຄວ້ນແລ້ວ ບວກກັບມີບາງປະເທດ ແລະ ເຂດແຄວ້ນໄດ້ກຳນົດເອົາບຸນກຸດຈີນເປັນວັນພັກລັດຖະການຕາມກົດໝາຍ ຖືໄດ້ວ່າປັດຈຸບັນບຸນກຸດຈີນໄດ້ກາຍເປັນມື້ບຸນລັກສະນະສາກົນແລ້ວ.

**ແຫຼ່ງຂໍ້ມູນ: CBC**



# ເຊັນບົດບັນທຶກການຮ່ວມມືວ່າດ້ວຍ ການສ້າງລະບົບຊຳລະບັນຊີດ້ວຍເງິນຢວນຈີນ ຢູ່ບຣາຊິນ



ອີງຕາມການລາຍງານຂ່າວເມື່ອບໍ່ດົນມານີ້ ໃຫ້ຮູ້ວ່າ: ຈີນ ແລະ ບຣາຊິນ ໄດ້ເຊັນບົດບັນທຶກການຮ່ວມມືກັນຄັ້ງສຳຄັນ ກ່ຽວກັບການສ້າງລະບົບຊຳລະບັນຊີດ້ວຍເງິນຢວນຂອງຈີນ ຢູ່ພາຍໃນປະເທດບຣາຊິນ ໂດຍການລົງນາມລະຫວ່າງທະນາຄານປະຊາຊົນຈີນ ກັບທະນາຄານກາງບຣາຊິນ ໃນບົດບັນທຶກການຮ່ວມມືວ່າດ້ວຍການສ້າງລະບົບຊຳລະບັນຊີດ້ວຍເງິນຢວນຈີນຢູ່ບຣາຊິນ.

ໂດຍມີການຄາດການວ່າ: ການສ້າງລະບົບດັ່ງກ່າວຈະມີຜົນດີຕໍ່ວິສາຫະກິດ ແລະ ສະຖາບັນການເງິນຈີນ ແລະ ບຣາຊິນ ໃນການນຳໃຊ້ເງິນຢວນຂອງຈີນ ເຂົ້າໃນການຄ້າຂາຍຂ້າມຊາດ ທັງຈະຊຸກຍູ້ໃຫ້ການຄ້າ ແລະ ການລົງທຶນຂອງສອງຝ່າຍມີຄວາມສະດວກຂຶ້ນຕື່ມອີກ.

**ແຫຼ່ງຂໍ້ມູນ: Global Times**

## ເບິ່ງໄວ້ ໄດ້ບົດຮຽນ

◆ ວິເສດ ສະແຫວງສຶກສາ

# ເລື່ອງປາກ-ທ້ອງ ຕ້ອງມີ ກົດໝາຍຄຸ້ມຄອງຄັກແນ່



ຄືດັ່ງໄດ້ແຈ້ງໃຫ້ຊາບແລ້ວໃນເມື່ອກ່ອນວ່າ ຄໍລຳ "ເບິ່ງໄວ້ໄດ້ບົດຮຽນ" ນີ້ມີໜ້າທີ່ສັນຫາມາເລົ່າກ່ຽວກັບມາດຕະການທາງກົດໝາຍ, ລະບຽບການ, ນະໂຍບາຍຕ່າງໆຂອງບາງປະເທດທີ່ນຳໃຊ້ເພື່ອຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ແລະ ເສດຖະກິດ. ເປັນຄໍລຳ ປະເພດເວົ້ານົວຫົວມ່ວນແຕ່ຊວນຄຶດໃນແງ່ມູມສ້າງສັນກ່ຽວກັບນິຕິກຳຕ່າງໆ ເພື່ອເກັບໄວ້ເປັນບົດຮຽນ.

ໃນການພົບກັນປະຈຳອາທິດນີ້, ຜູ້ຂຽນມີເລື່ອງກ່ຽວກັບມາດຕະການຄຸ້ມຄອງເລື່ອງປາກເລື່ອງທ້ອງສຳລັບຜູ້ບໍລິໂພກໃຫ້ມີຄວາມປອດໄພ ໄດ້ປະໂຫຍດຈາກອາຫານການກິນ, ໃນປີ 2014 ມີເລື່ອງໃຫຍ່ດັງໄກມາຈາກເກາະໄຕ້ຫວັນ ຂອງ ສປ.ຈີນ ກ່ຽວກັບການຈັບກຸມ ແລະ ປັບໃໝເຈົ້າຂອງໂຮງງານຊາງກວນ (Chang Guann) ທີ່ດຳເນີນທຸລະກິດຜະລິດ ແລະ ຈຳໜ່າຍນ້ຳມັນຄົວກິນທີ່ໃຫຍ່ທີ່ສຸດຢູ່ໃນເກາະແຫ່ງນີ້, ເລື່ອງເພາະມີສາຂາຈຳໜ່າຍເຊິ່ງເປັນຮ້ານອາຫານຢູ່ພາຍໃນ ແລະ ຕ່າງປະເທດຫຼາຍກວ່າ 1.000 ແຫ່ງ. ແຕ່ແລ້ວຢູ່ບໍ່ຢູ່ກໍເກີດເລື່ອງບໍ່ດີກັບໂຮງງານແຫ່ງນີ້ ຍ້ອນວ່າຜູ້ເປັນເຈົ້າຂອງເກີດມີພະຍາດ "ຫົວໃສໃຈຄິດ" ຢາກລວຍໃຫຍ່ລວຍໄວ ຈຶ່ງໄດ້ລັກລອບເອົານ້ຳມັນເກົ່າທີ່ເຫຼືອຈາກໃຊ້ຄົວກິນແລ້ວມາປົນກັບນ້ຳມັນໝູ ສົ່ງໄປຈຳໜ່າຍຕໍ່ໃຫ້ບັນດາຮ້ານອາຫານຂາປະຈຳ, ຜູ້ຂຽນເຊື່ອວ່າຢູ່ລາວພວກເຮົາຄົງບໍ່ມີຮ້ານອາຫານໃດໃຊ້ນ້ຳມັນຄົວກິນຈາກໂຮງງານຊາງກວນ ທີ່ມີແຕ່ເລື່ອງກວນໆແຫ່ງນີ້ດອກ. ສຸດທ້າຍຂ່າວໄດ້ບອກວ່າ ພະຍາດຫົວໃສໃຈຄິດຂອງເຈົ້າຂອງໂຮງງານແຫ່ງນີ້ຖືກເປີດເຜີຍ, ເຈົ້າຂອງໂຮງງານຖືກຈັບຄຸມ ແລະ ບັງຄັບໃຫ້ເສຍເງິນປັບໃໝຈຳນວນ 50 ລ້ານໂດລາໄຕ້ຫວັນ (ໃນປີ 2014 ນັ້ນ 1 ໂດລາໄຕ້ຫວັນມີມູນຄ່າເທົ່າກັບ 266 ກີບປາຍ) ແຕ່ສຳຄັນໄປກວ່າການຈັບກຸມ ແລະ ປັບໃໝຜູ້ກະທຳຜິດນັ້ນ ໃນເຫດການຄັ້ງນັ້ນ ໄດ້ນຳໄປສູ່ການສ້າງ ແລະ ປະກາດໃຊ້ກົດໝາຍວ່າດ້ວຍການຄຸ້ມຄອງຜູ້ບໍລິໂພກຢູ່ເກາະໄຕ້ຫວັນ. ບົດບັນຍັດເດັດໆຂອງກົດໝາຍດັ່ງກ່າວ ແມ່ນບົດລົງໂທດຕິດຄຸກສູງສຸດ 7 ປີ ບວກກັບປັບໃໝເປັນເງິນ ຈຳນວນສູງ, ຜະລິດ ຫຼື ລັກລອບຈຳໜ່າຍອາຫານປົນເປື້ອນ ກໍຄືອາຫານຕ້ອງຫ້າມ. ນອກຈາກນັ້ນ, ທາງການຂອງເກາະແຫ່ງນີ້ ຍັງມີເງິນລາງວັນສູງສຸດ 2,2 ລ້ານໂດລາໄຕ້ຫວັນ ສຳລັບຜູ້ທີ່ແຈ້ງຂໍ້ມູນອັນເປັນປະໂຫຍດໃຫ້ເຈົ້າໜ້າທີ່ຊາບກ່ຽວກັບຜູ້ລະເມີດກົດໝາຍສະບັບນີ້.

ຕໍ່ໄປແມ່ນຂ່າວເກົ່າໆ ຈາກປະເທດຝຣັ່ງທີ່ບອກວ່າ: ທາງການຂອງປະເທດນີ້ໄດ້ຮັບຮອງເອົາກົດໝາຍສະບັບໜຶ່ງ ໃນວັນທີ 3 ກຸມພາ 2016 ທີ່ກຳນົດຫ້າມຖິ້ມອາຫານທີ່ໃກ້ຈະໝົດອາຍຸ. ຂໍ້ມູນເບື້ອງຫຼັງການຮັບຮອງເອົາກົດໝາຍສະບັບນີ້ ກໍຄືສະຖິຕິທີ່ບອກວ່າ ໃນແຕ່ລະປີຄົນຝຣັ່ງແຕ່ລະຄົນໄດ້ຖິ້ມອາຫານເສດເຫຼືອໃນຈຳນວນ 20-30 ກິໂລ ໃນນັ້ນ 7 ກິໂລ ຍັງເປັນອາຫານທີ່ຍັງມີສິ່ງຫຸ້ມຫໍ່ຢູ່ຢ່າງສົມບູນໝາຍຄວາມວ່າຍັງເປັນອາຫານດີໆຢູ່ ທາງການຝຣັ່ງມີຄວາມວິຕົກວ່າຖ້າຫາກຍັງມີການຖິ້ມອາຫານແບບນີ້ຕໍ່ໄປ, ທົ່ວທັງປະເທດກໍຈະມີຂີ້ເຫຍື້ອອາຫານສູງເຖິງ 7,1 ໂຕນຕໍ່ປີ. ຍ້ອນແນວນີ້ເອງກົດໝາຍຫ້າມຖິ້ມອາຫານໃກ້ຈະໝົດອາຍຸ ຈຶ່ງກຳນົດໃຫ້ເອົາອາການເຫຼົ່ານີ້ໄປແຈກຢາຍເປັນການກຸສົນໃຫ້ຜູ້ທີ່ອຶດຫິວ ຫຼື ສົ່ງເຂົ້າທະນາຄານອາຫານ. ກົດໝາຍຍັງໄດ້ກຳນົດໃຫ້ບັນດາຫ້າງຮ້ານໃຫຍ່ໆທີ່ຂາຍອາຫານຕ້ອງມີສາງເກັບອາຫານໃກ້ຈະໝົດອາຍຸແທນທີ່ຈະເທຖິ້ມຄືເມື່ອກ່ອນ. ບັນດາອົງການກຸສົນມີໜ້າທີ່ໄປຮັບໂຮມເອົາອາຫານດັ່ງກ່າວ ໂດຍບໍ່ເສຍຄ່າເພື່ອນຳໄປແຈກຢາຍຕໍ່ໃຫ້ຄົນທຸກຍາກທ້ອງແຫ້ງຈຳນວນເປັນລ້ານຄົນໃນປະເທດຝຣັ່ງເວລານັ້ນ.

ເອີນີ້ ກໍເປັນບົດຮຽນທີ່ດີ ເອີ້ນວ່າຍິງປືນນັດດຽວໄດ້ນົກສອງໂຕ ທັງເປັນການກຳຈັດຂີ້ເຫຍື້ອປະເພດອາຫານ ແລະ ທັງເປັນການໃຫ້ທານແກ່ຜູ້ອຶດຫິວເພື່ອເອົາບຸນອີກດ້ວຍ.

ທະນາຄານພັດທະນາລາວ
LDB Bank




## ຄວາມຈຳດີ

*# ບ່າວກະບື*

*ໃນຂະນະທີ່ຊາຍອາຍຸສູງສອງຄົນ ພວມເວົ້ານົວຫົວມ່ວນນຳກັນແບບເພື່ອນໆຢູ່ນັ້ນ, ຜູ້ໜຶ່ງພັດຖາມຂຶ້ນວ່າ: "ດວງ, ເປັນແນວໃດ ຄະລີນິກຟື້ນຄວາມຈຳ ບ່ອນເຖົ້າໄປປົວຫວ່າງເດືອນແລ້ວນັ້ນນ່າ?"*

ເຖົ້າດວງຕອບວ່າ: "ຍົກໂປ້! ຢູ່ນັ້ນ, ພວກເຂົາສອນໃຫ້ພວກເຮົາຮູ້ຈັກຫຼັກເຕັກນິກກ່ຽວກັບຈິດຕະສາດ, ຈິນຕະນາການ, ການຄົບຄ້າສະມາຄົມ. ສຳລັບເຮົາແລ້ວຖືວ່າໄດ້ຜົນດີຫຼາຍ"

"ຈັ່ງແມ່ນຊາດຄັກບໍ່! ຄະລີນິກນັ້ນຊື່ແນວໃດ"

ເຖົ້າດວງມຶດແປດດ້ານ. ເຂົາຄຶດແລ້ວຄຶດອີກ ແຕ່ກໍຍັງຈື່ຊື່ຄະລີນິກນັ້ນບໍ່ໄດ້. ຕໍ່ມາ, ໃບໜ້າເຂົາກໍປາກົດມີຮອຍຍິ້ມເຜີຍອອກມາໃຫ້ເຫັນ. ເຂົາຖາມຂຶ້ນວ່າ: "ດອກໄມ້ປະຈຳຊາດລາວເຮົານັ້ນເອີ້ນວ່າແນວໃດເກາະ?"

"ເຖົ້າໝາຍເຖິງດອກຈຳປານັ້ນຫວະ?" ຄູ່ສົນທະນາຖາມຄືນ "ແມ່ນ... ແມ່ນດອກອັນນັ້ນລະເຖົ້າ!". ເວົ້າແລ້ວ ເຖົ້າດວງກໍງວາກໄປຫາເມຍຜູ້ຊື່ວ່າ 'ຈຳປາ' "ຈຳປາເອີຍ.. ຄະລີນິກນັ້ນຊື່ແນວໃດ ເຈົ້າຈື່ບໍ່?"

## GOOD MEMORY

*# BAOKBU*

Two elderly men were enjoying friendly conversation when one of the men asked the other: "Duang, how was the memory clinic you went to last month?"

"Outstanding," Duang replied. "They taught us all the latest psychological techniques - visuali zation, association. It made a huge difference for me."

"That's great! What was the name of the clinic?"

Duang went blank. He thought and thought, but couldn't remember. Then a smile broke across his face and he asked, "What do you call the national flower of Laos?"

"You mean Champa?" asked the other.

"Yes, that's it!" He turned to his wife who name was Champa, "Champa, what was the name of that clinic. Do you remember?"



**ມ້າລາຍຊາຍໜ້າ**

● ໂດຍ : ພູຜາ

**ຜູ້ຊີ້ນຳ :**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ